ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກີລາ

ບົດລາຍງານການປະເມີນພາຍນອກ

ວິທະຍາໄລຄູສະຫວັນນະເຂດ, ຄັ້ງວັນທີ 21 – 22 ສິງຫາ 2017

ໂດຍ: ຄະນະປະເມີນພາຍນອກ

ກັນຍາ 2017

ໜັງສືຮັບຮອງການປະເມີນພາຍນອກ

ໂດຍປະຕິບັດຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກີລາ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ແລະ ເຂົ້າຮ່ວມກອງປະຊຸມກະກຽມ-ສະຫຼຸບຜົນການປະເມີນພາຍນອກສະບັບເລກທີ 2727/ສສກ ລົງວັນທີ 15 ມິຖຸນາ 2017 ແລະ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກີລາ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບລົງປະເມີນພາຍນອກໃຫ້ແກ່ວິທະຍາໄລຄູ 8 ແຫ່ງ ສະບັບເລກທີ 2726/ສສກ ລົງວັນທີ 15 ມິຖຸນາ 2017, ຄະນະປະເມີນພາຍນອກຂໍຮັບຮອງว่า: ຄະນະປະເມີນໄດ້ດຳເນີນການປະເມີນຄຸນນະພາບພາຍນອກຕາມມາດຕະຖານຄຸນນະພາບສະຖານການສຶກສາຊັ້ງສູງ ປະຈຳສົກຮຽນ 2016-2017 ຂອງ**ວິທະຍາໄລຄູສະຫວັນນະເຂດ ໃນລະຫว่າງວັນທີ 21-22 ສິງຫາ 2017** ໂດຍອິງໃສ່ການສຶກສາຂໍ້ມູນຕາມບົດລາຍງານການປະເມີນຕົນເອງ, ການຢ້ຽມຊົມສະຖານທີ່ຕົວຈິງ, ການກວດກາຂໍ້ມູນຫຼັກຖານອ້າງອິງຕ່າງໆຂອງວິທະຍາໄລຄູ, ແລະ ຂໍ້ມູນທີ່ໄດ້ຈາກການສຳພາດຄະນະອຳນວຍການ, ຫົວໜ້າຫ້ອງການ, ຄູ-ອາຈານ, ພະນັກງານ, ນັກສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ຄະນະປະເມີນຄຸນນະພາບພາຍນອກໄດ້ມີຄວາມເປັນເອກະພາບ ແລະ ຢັ້ງຢືນຜົນການປະເມີນຄຸນນະພາບການສຶກສາພາຍນອກໃນບົດລາຍງານສະບັບນີ້ว่ามีความถูกต้อง ແລະແທດເໝາະກັບຄວາມເປັນຈິງທຸກປະການ

ລາຍເຊັນຫົວໜ້າຄະນະ

ລາຍເຊັນຄະນະຜູ້ທີ1

ລາຍເຊັນຄະນະຜູ້ທີ2

ລາຍເຊັນກອງເລຂາ:

1.

2.

ຄຳນຳ

ການປະເມີນຄຸນນະພາບການສຶກສາພາຍນອກແມ່ນ ການປະເມີນເພື່ອຮັບຮອງຄຸນນະພາບການສຶກສາ ໃຫ້ແກ່ວິທະຍາໄລຄູ ຕາມມາດຕະຖານສະຖານການສຶກສາຊັ້ນສູງ ແລະ ເພື່ອໃຫ້ຄຳແນະນຳແກ່ວິທະຍາໄລຄູ ໃນການສົ່ງເສີມ ແລະ ປັບປຸງຄຸນນະພາບການສຶກສາພາຍໃນວິທະຍາໄລທີ່ກ່ຽວຂ້ອງ.

ການປະເມີນຄຸນນະພາບການສຶກສາພາຍນອກໄດ້ຈັດຕັ້ງປະຕິບັດທີ່ວິທະຍາໄລຄູສະຫວັນນະເຂດ ເຊິ່ງຄະນະປະເມີນພາຍນອກປະກອບດ້ວຍຜູ້ຊົງຄຸນວຸດທິທີ່ໄດ້ຜ່ານການຝຶກອົບຮົມການເປັນຜູ້ປະເມີນ ມີປະສົບການໃນການປະເມີນສະຖານການສຶກສາຊັ້ນສູງມາກ່ອນ ແລະ ວິຊາການຈາກສູນປະກັນຄຸນນະພາບການສຶກສາເປັນກອງເລຂາ ພ້ອມທັງໄດ້ຮັບການແຕ່ງຕັ້ງຈາກລັດຖະມົນຕີກະຊວງສຶກສາທິການ ແລະ ກີລາ ຕາມຂໍ້ຕົກລົງສະບັບເລກທີ 2726/ສສກ ລົງວັນທີ 15 ມີຖຸນາ 2017, ການປະເມີນດັ່ງກ່າວໄດ້ດຳເນີນຮ່ວມກັບວິທະຍາໄລຄູສະຫວັນນະເຂດໃນລະຫວ່າງ ວັນທີ 21 – 22 ສິງຫາ (8) 2017.

ຄະນະປະເມີນພາຍນອກໄດ້ຂຽນບົດລາຍງານຜົນການປະເມີນຄຸນນະພາບການສຶກສາພາຍນອກສະບັບນີ້ຂຶ້ນເພື່ອສະຫຼຸບ-ລາຍງານຜົນທີ່ຄະນະປະເມີນ ໄດ້ປະເມີນຕາມສະພາບຄວາມເປັນຈິງຂອງວິທະຍາໄລໃນສົກປີ 2016-2017 ດັ່ງນີ້: (1) ການວິເຄາະຂໍ້ມູນຈາກບົດລາຍງານປະເມີນຕົນເອງ, (2) ການສຶກສາຫາຂໍ້ມູນຈາກເອກະສານທີ່ເປັນຫຼັກຖານໃນແຟ້ມຕ່າງໆ, (3) ການຢ້ຽມຊົມຫຼັກຖານທີ່ເປັນສະຖານທີ່ຈິງຕ່າງໆພາຍໃນວິທະຍາໄລ ແລະ (4) ການສຳພາດ ແລະ ແລກປ່ຽນຄຳຄິດເຫັນຈາກຄະນະອຳນວຍການ, ຫົວໜ້າຫ້ອງການ, ຄູ-ອາຈານ , ພະນັກງານ, ນັກສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງ ໂດຍມີການພິຈາລະນາ ແລະ ປັບຮູບແບບການປະເມີນໃຫ້ເໝາະສົມກັບວິໄສທັດ, ສະພາບຄວາມເປັນຈິງ ແລະ ລັກສະນະສະເພາະຂອງວິທະຍາໄລຄູ.

ການປະເມີນຄັ້ງນີ້ຈະບໍ່ສາມາດສຳເລັດໄດ້ ຖ້າຫາກພາກສ່ວນກ່ຽວຂ້ອງບໍ່ເຫັນຄວາມສຳຄັນ ແລະ ຂາດການມີສ່ວນຮ່ວມເຊັ່ນ: ຄະນະພັກ-ຄະນະອຳນວຍການ, ຄູອາຈານ ແລະ ພະນັກງານວິທະຍາໄລຄູທຸກທ່ານ, ຕະຫຼອດຮອດອາດີດນັກສຶກສາ ແລະ ບັນດາອຳນວຍການ ແລະ ຜູ້ຕ່າງໜ້າຈາກໂຮງຮຽນປະຖົມ ແລະ ມັດທະຍົມທຸກທ່ານ. ພ້ອມດ້ວຍຄະນະນຳ ແລະ ວິຊາການຂອງສູນປະກັນໃນການຂຶ້ນແຜນວິຊາການ, ການແລກປ່ຽນບົດຮຽນ, ການປະສານງານ ແລະ ງົບປະມານໃນການໃຊ້ຈ່າຍຄັ້ງນີ້. ຍິ່ງໄປກວ່ານັ້ນແມ່ນການເຮັດວຽກທີ່ບໍ່ຮູ້ອິດຮູ້ເມື່ອຍຂອງຄະນະປະເມີນທັງ 3 ທ່ານ.

ດັ່ງນັ້ນ, ຄະນະປະເມີນພາຍນອກຫວັງເປັນຢ່າງຍິ່ງວ່າທາງວິທະຍາໄລຄູສະຫວັນນະເຂດ ຈະໄດ້ນຳຜົນການປະເມີນໃນຄັ້ງນີ້ໄປໃຊ້ໃນການເສີມຂະຫຍາຍ, ພັດທະນາຈຸດເດັ່ນ ແລະ ປັບປຸງຂໍ້ຄົງຄ້າງຕາມບົດບາດ ແລະ ໜ້າທີ່ຂອງວິທະຍາໄລຄູກໍ່ຄືສະຖານການສຶກສາຊັ້ນສູງ ເພື່ອນຳໄປສູ່ການພັດທະນາໃນທຸກພາລະກິດ ແລະ ຈຸດໝາຍການກໍ່ສ້າງໃຫ້ເປັນໄປຕາມວິໄສທັດ ແລະ ຈຸດປະສົງຂອງວິທະຍາໄລສືບຕໍ່ໄປ.

ວັນທີ 01 ກັນຍາ (9) 2017

ຄະນະປະເມີນຄຸນນະພາບການສຶກສາພາຍນອກ

ສາລະບານ

ໜັງສືຮັບຮອງການປະເມີນພາຍນອກ 2

ຄຳນຳ 3

I. ບົດສະຫຼຸບສຳລັບຜູ້ບໍລິຫານ 5

1. ຂໍ້ມູນພື້ນຖານຂອງສະຖາບັນໂດຍຫຍໍ້ 5

2. ຈຸດເດັ່ນ, ຂໍ້ຄົງຄ້າງ ແລະ ຂໍ້ສະເໜີແນະຕໍ່ວິທະຍາໄລໃນພາບລວມ 6

3. ຜົນການປະເມີນຄຸນນະພາບ 7

II. ວິທີການປະເມີນ 8

1. ການກະກຽມ ແລະ ການວາງແຜນ ກ່ອນການປະເມີນ 8

2. ໃນລະຫວ່າງການດຳເນີນການປະເມີນ 8

3. ການດຳເນີນການຫຼັງຈາກສຳເລັດການປະເມີນ 8

III. ຜົນການປະເມີນຄຸນນະພາບພາຍນອກຕາມແຕ່ລະມາດຕະຖານ 9

ມາດຕະຖານທີ I: ວິໄສທັດ, ພາລະໜ້າທີ່ ແລະຈຸດໝາຍການກໍ່ສ້າງ 9

ມາດຕະຖານທີ II: ການຄຸ້ມຄອງ ແລະ ບໍລິຫານ 9

ມາດຕະຖານທີ III: ການພັດທະນາບຸກຄະລາກອນ 10

ມາດຕະຖານທີ IV: ຫຼັກສູດ 10

ມາດຕະຖານທີ V: ປະສິດທິຜົນຂອງການຮຽນ-ການສອນ 11

ມາດຕະຖານທີ VI: ການສົ່ງເສີມນັກສຶກສາ 11

ມາດຕະຖານທີ VII: ສະພາບແວດລ້ອມ ແລະ ແຫຼ່ງການຮຽນຮູ້ 12

ມາດຕະຖານທີ VIII: ລະບົບຂໍ້ມູນຂ່າວສານ 13

ມາດຕະຖານທີ IX: ລະບົບການປະກັນຄຸນນະພາບພາຍໃນ 13

ມາດຕະຖານທີ X: ການຄົ້ນຄວ້າວິທະຍາສາດແລະການບໍລິການວິຊາການ 14

IV. ສັງລວມບັນດາຂໍ້ສະເໜີ ແລະ ຂໍ້ສັງເກດຂອງຄະນະປະເມີນພາຍນອກ 15

V. ເອກະສານຊ້ອນທ້າຍ 18

5.1 ຕາຕະລາງເຄື່ອນໄຫວການປະເມີນພາຍນອກ 18

5.2 ລາຍຊື່ ແລະ ພາກສ່ວນທີ່ຖືກສຳພາດ 19

5.3 ຮູບພາບປະກອບແຕ່ລະມາດຕະຖານ 23

I. ບົດສະຫຼຸບສຳລັບຜູ້ບໍລິຫານ

1. ຂໍ້ມູນພື້ນຖານຂອງສະຖາບັນໂດຍຫຍໍ້

ວິທະຍາໄລຄູສະຫວັນນະເຂດ ຂຽນຫຍໍ້ ວຄສ ຕັ້ງຢູ່ບ້ານອຸດົມວິໄລ ຫ່າງຈາກເທດສະບານເມືອງໄກສອນ ພົມວິຫານ 7 ກມ. ມີຊື່ ພາສາອັງກິດວ່າ Savannakhet Teacher Training College ຊຶ່ງເປັນກົງຈັກໜຶ່ງພາຍ ໃຕ້ການຊີ້ນຳທາງດ້ານວິຊາການຈາກກົມສ້າງຄູ, ກະຊວງສຶກສາທິການ ແລະ ກີລາ. ວຄສ ມີປະຫວັດຕິດພັນ ກັບການສ້າງຄູມາຍາວນານ ສ້າງຕັ້ງຂຶ້ນໃນປີ 1969 ຊື່ຕາມພາສາຝລັ່ງວ່າ Ecole Normal Savannakhet, ຊຸມ ປີ 1969-1975 ເປັນໂຮງຮຽນກໍ່ສ້າງຄູຊັ້ນຕົ້ນສອນໃນລະບົບ 6+2 (ລະບົບເລັ່ງລັດ) ແລະ 6+4 (ຄູປະຖົມ ສົມບູນ), ປີ 1975 ປ່ຽນຊື່ມາເປັນ ໂຮງຮຽນກໍ່ສ້າງຄູຊັ້ນກາງເລກ 5, ໃນຊ່ວງ 1984-1985 ໄດ້ສ້າງຕັ້ງມະຫາ ວິທະຍາໄລສ້າງຄູສະຫວັນນະເຂດຊຶ່ງມີເຂດບໍລິການ 6 ແຂວງຄື: ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ, ສາລະວັນ, ເຊກອງ ແລະ ອັດຕາປື ໂດຍສອນຄວບຄູ່ກັບ ໂຮງຮຽນສ້າງຄູຊັ້ນກາງເລກ 5. ໃນປີ 1989 ກະຊວງສຶກສາ ວັດທະນະທຳ ແລະ ກີລາ (ກະຊວງສຶກສາທິການ ແລະ ກີລາ ປັດຈຸບັນ) ໄດ້ຕົກລົງໂຮມ 2 ສະຖານສຶກສາເຂົ້າກັນ ແລະ ເອີ້ນຊື່ເປັນ ວິທະຍາໄລຄູສະຫວັນນະເຂດຮອດປັດຈຸບັນ.

ວຄສ ໄດ້ກຳນົດວິໄສທັດໃນປັດຈຸບັນວ່າ "**ວິທະຍາໄລຄູສະຫວັນນະເຂດ ເປັນສູນກາງແຫ່ງການພັດທະນາ ວິຊາຊີບຄູທີ່ມີຄຸນນະພາບ ແລະ ຈັນຍາບັນ, ເອົາໃຈໃສ່ການວິໄຈ ສາມາດເຊື່ອມໂຍງໄດ້ກັບສາກົນ**" ຊຶ່ງໄດ້ ກຳນົດຄາດໝາຍສູ້ຊົນແຕ່ນີ້ຮອດປີ 2020 ສ້າງສູນແຫ່ງຄວາມເປັນເລີດໃນ 2 ສາຂາຄື: ຄະນິດສາດ ແລະ ວິທະຍາສາດທຳມະຊາດ. ພ້ອມດຽວກັນນີ້ໄດ້ມີແຜນພັດທະນາ 5 ປີ, 2016-2020 ຂອງສະຖາບັນໄວ້ຈະແจ້ງ ໂດຍຜັນຂະຫຍາຍຈາກແຜນງານ ແລະ ໂຄງການຂອງກົມສ້າງຄູ ໂດຍມີເຂດບໍລິການຢູ່ 2 ແຂວງຄື ແຂວງ ຄຳມ່ວນ ແລະ ສະຫວັນນະເຂດ. ໃນສົກປີ 2016-2017 ວຄສ ໄດ້ຮັບອະນຸມັດຈາກກົມສ້າງຄູ 17 ຫຼັກສູດຄື: ຫຼັກສູດສ້າງຄູມັດທະຍົມລະດັບປະລິນຍາຕີ 7 ຫຼັກສູດ, ອະນຸປະລິນຍາ 1 ຫຼັກສູດ, ສ້າງຄູປະຖົມ 5 ຫຼັກສູດ (ຊັ້ນກາງ-ປະລິນຍາຕີ-ປະລິນຍາຕີຕໍ່ເນື່ອງ), ແລະ ຄູອະນຸບານ 4 ຫຼັກສູດ (ຊັ້ນກາງ-ປະລິນຍາຕີ-ປະລິນຍາ ຕີຕໍ່ເນື່ອງ). ມີຈຳນວນນັກສຶກສາທັງໝົດ 2632 ຄົນ ຍິງ 1932 ຄົນ, ໃນນັ້ນນັກສຶກສາປະລິນຍາຕີມີ 1865 ຄົນ ກວມເອົາ 70 ສ່ວນຮ້ອຍຂອງນັກຮຽນທັງໝົດ, ຊັ້ນສູງ 344 ຄົນ ເທົ່າກັບ 14 ສ່ວນຮ້ອຍ ແລະ ຊັ້ນກາງ 423 ຄົນ ເທົ່າກັບ 16 ສ່ວນຮ້ອຍ. ຈຳນວນບຸກຄະລາກອນທັງໝົດ 204 ຄົນ, ຈົບປະລິນຍາເອກ 1 ຄົນ, ປະລິນຍາໂທ 52 ຄົນ, ປະລິນຍາຕີ 119 ຄົນ, ອະນຸປະລິນຍາ 31 ຄົນ, ແລະ ຊັ້ນກາງ 1 ຄົນ. ການຮັບ ນັກສຶກສາມີ 2 ລະບົບ ຄືຈາກໂຄຕ້າຂອງແຂວງໃນເຂດບໍລິການ ແລະ ການເສັງເຂົ້າ. ໃນສົກ 2016-2017 ວິທະຍາໄລໄດ້ຮັບເງິນງົບປະມານທັງໝົດ 17.154.620.700 ກີບ ຊຶ່ງມາຈາກງົບປະມານລັດ, ງົບປະມານ ວິຊາການ, ງົບປະມານໂຄງການ, ງົບປະມານຊ່ວຍເຫຼືອ (ຫ້ອງການໃໝ່) ແລະ ການປະກອບສ່ວນຈາກພາຍ ນອກ ຄື 11.096.880.000 ກີບ, 1.190.097.000 ກີບ, 959.758.000 ກີບ, 3.851.905.450 ກີບ, ແລະ 55.980.250 ກີບ ຕາມລຳດັບ.

ຂະບວນການປະເມີນຕົນເອງຂອງວິທະຍາໄລຄູສະຫວັນນະເຂດໄດ້ມີການເຄື່ອນໄຫວແຕ່ປີ 2011 ເປັນ ຕົ້ນມາໂດຍໄດ້ມີການແຕ່ງຕັ້ງຄະນະຮັບຜິດຊອບຂອງຜູ້ອຳນວຍການ, ໃນການປະເມີນພາຍໃນຄັ້ງນີ້ແມ່ນດຳ

ເນີນໃນໄລຍະເດືອນມີຖຸນາ ເຖິງ ສິງຫາ ໂດຍໄດ້ຮັບການແນະນຳຈາກ ສູນປະກັນຄຸນນະພາບການສຶກສາ, ເຮັດການລະດົມສະໝອງ-ປະຊຸມພາຍໃນ ແລະ ມອບວຽກແບ່ງງານໃຫ້ແຕ່ລະພາກສ່ວນໃນການເກັບລວບລວມຂໍ້ມູນຫຼັກຖານ.

2. ຈຸດເດັ່ນ, ຂໍ້ຄົງຄ້າງ ແລະ ຂໍ້ສະເໜີແນະຕໍ່ວິທະຍາໄລໃນພາບລວມ

ວິທະຍາໄລຄູສະຫວັນນະເຂດໄດ້ກຳນົດວິໄສທັດ ພັນທະກິດ ແລະ ເປົ້າໝາຍການກໍ່ສ້າງຈະແຈ້ງ ແລະ ໄດ້ເຜີຍແຜ່ຜ່ານເວັບໄຊ, ແຜ່ນພັບ ແລະ ທາງເຂົ້າສະຖານສຶກສາ, ມີແຜນປະຕິບັດງານ 2016-2020. ພື້ນຖານໂຄງລ່າງສາມາດຕອບສະໜອງການຈັດການຮຽນ-ການສອນໂດຍພື້ນຖານ. ຈຳນວນບຸກຄະລາກອນແມ່ນມີວຸດທິພຽງພໍໃນການປະຕິບັດພັນທະກິດຂອງຕົນ. ຄູອາຈານຫຼາຍທ່ານສາມາດເຮັດການວິໄຈ ແລະ ຕີພິມຜົນງານວິໄຈໃນວາລະສານພາກພື້ນ ແລະ ສາກົນ. ວຄສ ໄດ້ມີລະບົບການຄຸ້ມຄອງບໍລິຫານທີ່ໃຊ້ເທັກໂນ�โลยีເຂົ້າຊ່ວຍຜູ້ບໍລິຫານ ຄູອາຈານ ນັກສຶກສາ ແລະ ພາກສ່ວນກ່ຽວຂ້ອງສາມາດເຂົ້າໃຊ້ບໍລິການໄດ້ຢ່າງສະດວກ ຜ່ານທາງອິນເຕີເນັດ ເຊັ່ນ: ຖານຂໍ້ມູນນັກສຶກສາ, ຕາຕະລາງຮຽນ, ຄະແນນ, ເອກະສານຂາອອກ ແລະ ອື່ນໆ. ວຄສ ຈັດໃຫ້ນັກສຶກສາຜູ້ທີ່ສົນໃຈໃນບາງວິຊາຊີບເສີມ ກ່ອນເຂົາເຈົ້າລົງຝຶກງານ ເຊັ່ນ: ປຸງແຕ່ງອາຫານ, ເສີມສວຍ, ຕັດຜົມ, ການເຮັດສວນຄົວ ເປັນຕົ້ນ.

ຄຽງຄູ່ສິ່ງທີ່ວິທະຍາໄລເຮັດໄດ້ດີ, ຄະນະປະເມີນພາຍນອກຍັງເຫັນວ່າ ວິທະຍາໄລຄູສະຫວັນນະເຂດຍັງມີບາງຂໍ້ຄົງຄ້າງອີງຕາມມາດຕະຖານ ເຊັ່ນ: ຂາດກົງຈັກທີ່ສຳຄັນຄືສະພາທີ່ປຶກສາ ຊຶ່ງເປັນການຂາດໂອກາດໃນການຮັບຟັງ ແລະ ກຳນົດແນວທາງຂອງສະຖາບັນການສຶກສາຂອງຕົນຈາກຫຼາຍພາກສ່ວນໃນໄລຍະສັ້ນ ແລະ ໄລຍະຍາວ. ຫຼາຍຫຼັກສູດທີ່ປະຕິບັດຜ່ານມາບໍ່ມີການປະເມີນທີ່ເປັນລະບົບ ແລະ ການນຳໃຊ້ຜົນຂອງການປະເມີນດັ່ງກ່າວເຂົ້າໃນການປັບດັດຫຼັກສູດແຕ່ລະໄລຍະຍັງບໍ່ເປັນຮູບປະທຳ ເຮັດໃຫ້ຫຼັກສູດທີ່ໃຊ້ຢູ່ໃນປັດຈຸບັນບໍ່ສອດຄ່ອງກັບຄວາມເປັນຈິງກັບລັກສະນະສະເພາະຂອງທ້ອງຖິ່ນເທົ່າທີ່ຄວນ ແລະ ບໍ່ໄດ້ໃຊ້ທ່າແຮງຂອງບຸກຄະລາກອນພາຍໃນຢ່າງເຕັມປະສິດທິພາບ ເນື່ອງຈາກເອື່ອຍອີງຫຼັກສູດທີ່ພັດທະນາຮ່ວມກັນໃນລະດັບສ່ວນກາງຈາກກົມສ້າງຄູເປັນຫລັກ. ບາງລະບຽບການເພື່ອຮັບປະກັນວ່າວິໄສທັດຈະຖືກນຳໄປສູ່ການປະຕິບັດ ເຫັນວ່າຍັງບໍ່ທັນສອດຄ່ອງ ຈຳນວນໜຶ່ງຍັງບໍ່ມີ. ເຄືອຂ່າຍການຮ່ວມມືກັບອາດີດນັກສຶກສາ ແລະ ລະບົບການຕິດຕາມນັກສຶກສາທີ່ຈົບໄປແລ້ວບໍ່ທັນເປັນລະບົບ.

ດ້ວຍບັນດາຫຼັກຖານຂໍ້ຄົງຄ້າງທີ່ກ່ຽວຂ້ອງຂ້າງເທິງນັ້ນ, ຄະນະປະເມີນພາຍນອກເຫັນວ່າຫຼາຍປັດໃຈມີຜົນກະທົບໃສ່ຄຸນນະພາບຂອງການຈັດການຮຽນ-ການສອນ ແລະ ໄດ້ມີຂໍ້ສະເໜີແນະດັ່ງນີ້: ວິທະຍາໄລຄວນຄົ້ນຄວ້າ ເງື່ອນໄຂໃນການສ້າງຕັ້ງສະພາທີ່ປຶກສາໂດຍໃຫ້ມີຜູ້ຊົ່ງຄຸນວຸດທິ ແລະ ພາກສ່ວນພາຍນອກໄດ້ເຂົ້າມາມີສ່ວນຮ່ວມ, ທົບທວນບັນດາລະບຽບການ ແລະ ສ້າງເຄື່ອງມືພາຍໃນເພື່ອຮັບປະກັນໄດ້ວິໄສທັດ ແລະ ພາລະກິດໄດ້ຖືກປະຕິບັດ ທັງຮັບປະກັນໄດ້ປະສິດທິພາບຂອງວຽກ. ຫຼັກສູດທີ່ປະຕິບັດສຳເລັດ ແລະ ກຳລັງ ຈັດຕັ້ງປະຕິບັດຄວນມີກົນໄກໃນການທົບທວນ ແລະ ປະເມີນຄືນ. ກົມມັດທະຍົມ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ), ແລະ ກົມສ້າງຄູຄວນມີການສົມທົບກັນໃນລະດັບມະຫາພາກ ແລະ ສື່ສານໃຫ້ພະແນກສຶກ

ສາທິການແລະກີລາ, ວິທະຍາໄລຄູ ແລະ ໂຮງງຽນມັດທະຍົມທົ່ວປະເທດເອກະພາບກັນໃນການນຳໃຊ້ວິທີການແຕ່ງບົດສອນແບບ UbD (Understanding by Design) ຫຼືແບບອື່ນ ເພາະນັກຮຽນຄູຂອງວິທະຍາໄລພົບບັນຫາເວລາລົງຝຶກງານ ຍ້ອນວ່າທາງວິທະຍາໄລບໍ່ໄດ້ເນັ້ນການແຕ່ງບົດສອນໃນຮູບແບບ UbD ຢ່າງດຽວໃນວິທະຍາໄລ. ວຄສ ຄວນເພີ່ມຄວາມຫຼາກຫຼາຍໃນການສົ່ງເສີມວິຊາຊີບທີ່ນັກຮຽນສົນໃຈ ແລະ ກົດຈະກຳດັ່ງກ່າວຄວນຈັດເປັນປົກກະຕິ ໂດຍສະເພາະໃນກຸ່ມຜູ້ຮຽນທີ່ມີຄວາມສົນໃຈ ແລະ ໃຫ້ບໍລິການສັງຄົມທົ່ວໄປ.

3. ຜົນການປະເມີນຄຸນນະພາບ

ການຕີລາຄາຂອງຄະນະປະເມີນພາຍນອກແມ່ນໄດ້ອີງໃສ່ການເກັບກຳຂໍ້ມູນເອກະສານຫຼັກຖານຈາກວິທະຍາໄລຕາມ 10 ມາດຕະຖານ ແລະ 50 ຕົວຊີ້ວັດຂອງມາດຕະຖານການສຶກສາຊັ້ນສູງ ປີ 2013. ການຕີລາຄາຜົນຄະແນນດັ່ງກ່າວແມ່ນບົນພື້ນຖານຄວາມເອກະພາບຂອງຜູ້ປະເມີນທັງ 3 ທ່ານ ໂດຍປາສະຈາກ ຄວາມກົດດັນ ແລະ ມີຄວາມເປັນເອກະລາດຈາກທຸກພາກສ່ວນ ຊຶ່ງ ຄະນະປະເມີນພາຍນອກໄດ້ສະຫຼຸບວ່າວິທະຍາໄລຄູສະຫວັນນະເຂດຢູ່ໃນເກນ “ **ດີ** ” ຕາມມາດຕະຖານການສຶກສາຊັ້ນສູງ. ລາຍລະອຽດດັ່ງຕາຕະລາງລຸ່ມນີ້:

ຕາຕະລາງສົມທຽບຜົນການປະເມີນຕົນເອງ ແລະ ຜົນການປະເມີນພາຍນອກ

ລ/ດ	ມາດຕະຖານ	ຜົນການປະເມີນ	
		ຜົນການປະເມີນ ຕົນເອງ	ຜົນການປະເມີນ ພາຍນອກ
I	ວິໄສທັດ, ພາລະໜ້າທີ່ ແລະຈຸດໝາຍການກໍ່ສ້າງ	5	4
II	ການຄຸ້ມຄອງ ແລະ ບໍລິຫານ	5	4
III	ການພັດທະນາບຸກຄະລາກອນ	5	4
IV	ຫຼັກສູດ	4	3
V	ປະສິດທິຜົນຂອງການຮຽນ-ການສອນ	4	4
VI	ການສົ່ງເສີມນັກສຶກສາ	4	4
VII	ສະພາບແວດລ້ອມ ແລະ ແຫຼ່ງການຮຽນຮູ້	5	4
VIII	ລະບົບຂໍ້ມູນຂ່າວສານ	5	4.5
IX	ລະບົບການປະກັນຄຸນນະພາບພາຍໃນ	4	4
X	ການຄົ້ນຄວ້າວິທະຍາສາດແລະການບໍລິການວິຊາການ	4	4.5
ຄະແນນສະເລັ່ຍ 10 ມາດຕະຖານ		**4.5**	**4.00**

II. ວິທີການປະເມີນ

ໃນການປະເມີນຄັ້ງນີ້ຄະນະຜູ້ປະເມີນພາຍນອກໄດ້ມີການດຳເນີນເປັນ 3 ໄລຍະຄື:

1. ການກະກຽມ ແລະ ການວາງແຜນ ກ່ອນການປະເມີນ

ຄະນະປະເມີນພາຍນອກໄດ້ເຂົ້າຮ່ວມກອງປະຊຸມຝຶກອົບຮົມ ແລະ ກະກຽມການລົງປະເມີນພາຍນອກ ວິທະຍາໄລຄູ 8 ແຫ່ງຕາມໜັງສືເຊີນຂອງສູນປະກັນຄຸນນະພາບການສຶກສາ, ກະຊວງສຶກສາທິການ ແລະ ກີລາ ເພື່ອວາງແຜນການລົງປະເມີນໂດຍໄດ້ມີການກຳນົດວັນ-ເວລາ, ວາລະການປະເມີນພາຍນອກ ຮ່ວມກັບວິຊາການ ຂອງສູນປະກັນຄຸນນະພາບການສຶກສາ ແລະ ເມື່ອໄດ້ຮັບບົດລາຍງານປະເມີນຕົນເອງຂອງວິທະຍາໄລຄູສະຫວັນ ນະເຂດ 5 ວັນກ່ອນລົງປະເມີນ ຄະນະປະເມີນພາຍນອກໄດ້ອ່ານເພື່ອສຶກສາຂໍ້ມູນ ແລະ ສ້າງຄຳຖາມກ່ອນການ ລົງປະເມີນຕົວຈິງ. ພ້ອມດຽວກັນນັ້ນ, ຜູ້ອຳນວຍການສູນປະກັນຄຸນນະພາບການສຶກສາໄດ້ຊີ້ແຈງກ່ຽວກັບ ແນວທາງ ແລະ ວິທີການປະເມີນ ແລະ ການລາຍງານຜົນການປະເມີນພາຍນອກໂດຍໄດ້ມອບໝາຍຄວາມ ຮັບຜິດຊອບໃຫ້ຄະນະປະເມີນຂາດຕົວໃນການປະເມີນຄັ້ງນີ້ຢ່າງເອກະລາດ.

2. ໃນລະຫວ່າງການດຳເນີນການປະເມີນ

ຄະນະໄດ້ໃຊ້ 3 ວິທີການຫຼັກໃນການປະເມີນຄື: ການສັງເກດ-ຢ້ຽມຊົມສະຖານທີ່ຈິງ, ການກວດກາ ເອກະສານຫລັກຖານ, ແລະ ການສຳພາດ. ການສຳພາດໄດ້ແບ່ງແຍກແຕ່ລະກຸ່ມສຳພາດເຊັ່ນ: ຄະນະອຳນວຍ ການ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ຄູອາຈານ, ນັກສຶກສາ, ອາດີດນັກສຶກສາ ແລະ ຜູ້ບໍລິຫານໂຮງຮຽນ ປະຖົມ-ມັດທະຍົມ. ພ້ອມນີ້ໃນຕອນທ້າຍຂອງການປະເມີນ, ຄະນະປະເມີນໄດ້ລາຍງານຜົນການປະເມີນເບື້ອງ ຕົ້ນໃຫ້ແກ່ວິທະຍາໄລໄດ້ຮັບຊາບ.

3. ການດຳເນີນການຫຼັງຈາກສຳເລັດການປະເມີນ

ພາຍຫຼັງການປະເມີນພາຍນອກ, ສູນປະກັນຄຸນນະພາບໄດ້ຈັດກອງປະຊຸມສະຫຼຸບຜົນການປະເມີນຂຶ້ນ ໂດຍຄະນະປະເມີນພາຍນອກໄດ້ສະຫຼຸບ-ຕີລາຄາຜົນການປະເມີນເພື່ອຜ່ານຜົນດັ່ງກ່າວຕໍ່ຄະນະຮັບຜິດຊອບຕາມ ການແຕ່ງຕັ້ງຂອງລັດຖະມົນຕີກະຊວງສຶກສາ ແລະ ກີລາ ກ່ອນສົ່ງໃຫ້ວິທະຍາໄລຄູສະຫວັນນະເຂດໄດ້ມີຄຳ ເຫັນ-ຊີ້ແຈງ ແລະ ເພື່ອຢັ້ງຢືນຄວາມຖືກຕ້ອງ. ຫຼັງຈາກນັ້ນ, ສູນປະກັນຄຸນນະພາບການສຶກສາຈະໄດ້ລາຍງານ ຜົນການປະເມີນຕໍ່ ທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກີລາ ເພື່ອຮັບຮອງຜົນການປະເມີນພາຍນອກ ແລະ ພາກສ່ວນທີ່ກ່ຽວຂ້ອງສາມາດນຳໃຊ້ຜົນການປະເມີນດັ່ງກ່າວເພື່ອເປັນບ່ອນອີງໃນການປັບປຸງ ແລະ ພັດທະນາຕໍ່ໄປ.

III. ຜົນການປະເມີນຄຸນນະພາບພາຍນອກຕາມແຕ່ລະມາດຕະຖານ

ມາດຕະຖານທີ I: ວິໄສທັດ, ພາລະໜ້າທີ່ ແລະຈຸດໝາຍການກໍ່ສ້າງ

1. ຜົນການວິເຄາະຈຸດດີ
    a. ມີຂໍ້ຕົກລົງອະນຸມັດນຳໃຊ້ວິໄສທັດຂອງອຳນວຍການ (ຮູບທີ 01).
    b. ມີການກຳນົດວິໄສທັດໄວ້ຢ່າງຊັດເຈນ ໂດຍຜ່ານຂະບວນການກອງປະຊຸມລະດົມສະໝອງ, ທົບທວນຄືນວິໄສທັດທີ່ມີແລ້ວ ປະສົມປະສານກັບງານວິໄຈ ແລະ ຜັນຂະຫຍາຍຕາມແນວທາງຂອງກົມສ້າງຄູ. ວິໄສທັດທີ່ຖືກພັດທະນາຂຶ້ນໄດ້ຜັນຂະຫຍາຍ ແລະ ແຊກຊ້ອນເຂົ້າໃນຫຼັກສູດລາຍວິຊາ;
    c. ໄດ້ມີການເຜີຍແຜ່ວິໄສທັດຜ່ານຫຼາຍຊ່ອງທາງເຊັ່ນ: ເວັບໄຊ, ແຜ່ນພັບ, ທາງເຂົ້າວິທະຍາໄລ.
2. ຜົນການວິເຄາະຂໍ້ຄົງຄ້າງ
    a. ວິໄສທັດ ພາລະກິດ ແລະ ເປົ້າໝາຍຂອງ ວຄສ ຂາດການການມີສ່ວນຮ່ວມໃນການພັດທະນາຈາກຫຼາຍພາກສ່ວນ ແລະເຜີຍແຜ່ໃຫ້ບຸກຄະລາກອນພາຍໃນຢ່າງທົ່ວເຖິງ.
    b. ວິໄສທັດຖືກກຳນົດໃໝ່ ຍັງບໍ່ເຫັນຜົນເກີດຂຶ້ນຢ່າງເປັນຮູບປະທຳເທື່ອ.
3. ຂໍ້ສະເໜີແນາະເພື່ອປັບປຸງ
    a. ກຳນົດວາລະໃນການທົບທວນວິໄສທັດ ພາລະກິດ ແລະ ແຜນພັດທະນາຂອງ ວຄສ ໃຫ້ມີສ່ວນຮ່ວມໃນການຮັບຟັງຄວາມຄິດເຫັນຈາກຫຼາຍພາກສ່ວນເພື່ອເຮັດການທົບທວນວິໄສທັດຄືນເປັນແຕ່ລະໄລຍະ ແລະ ເພີ່ມການເຜີຍແຜ່ໃຫ້ສັງຄົມຮັບຮູ້ຜ່ານຫຼາຍຊ່ອງທາງ ພ້ອມໃຫ້ມີການເກັບກຳຫຼັກຖານການປະຊຸມທີ່ກ່ຽວຂ້ອງກັບວິໄສທັດ.
    b. ເພີ່ມທະວີການເຜີຍແຜ່ໃຫ້ແກ່ຄູອາຈານບຸກຄະລາກອນພາຍໃນໃຫ້ມີຄວາມເປັນເອກະພາບກັນ ແລະ ຜັນຂະຫຍາຍເຂົ້າໄປສູ່ການເຄື່ອນໄຫວທີ່ຕົນເອງຮັບຜິດຊອບ.

ມາດຕະຖານທີ II: ການຄຸ້ມຄອງ ແລະ ບໍລິຫານ

1. ຜົນການວິເຄາະຈຸດດີ
    a. ມີການແບ່ງງານ-ຄວາມຮັບຜິດຊອບຂາດຕົວໃຫ້ແກ່ຄະນະອຳນວຍການທຸກທ່ານ.
    b. ມີລະບົບການຈັດຕັ້ງທີ່ແໜ້ນໜາໃນແຕ່ລະຫ້ອງການ.
2. ຜົນການວິເຄາະຂໍ້ຄົງຄ້າງ
    a. ບໍ່ມີສະພາທີ່ປຶກສາ ຊຶ່ງຈະເປັນການຂາດໂອກາດໃນການຮັບຟັງຄຳເຫັນທາງວິຊາການຈາກພາກສ່ວນອື່ນທີ່ກ່ຽວຂ້ອງກັບການປະຕິບັດພາລະກິດຂອງຕົນເປັນແຕ່ລະໄລຍະ ໂດຍສະເພະແມ່ນສະຖາບັນການສຶກສາຢູ່ໃນທ້ອງຖິ່ນ, ພະແນກການທີ່ກ່ຽວຂ້ອງ, ຕົວແທນຂອງສະຖາບັນຄອບຄົວ, ຜູ້ຈ້າງງານໃນທ້ອງຖິ່ນ, ນັກປາດ-ຜູ້ຊົ່ງຄຸນວຸດທິ ແລະ ຕົວແທນຂອງນັກສຶກສາເປັນຕົ້ນ. ກຸ່ມຄົນເລົ່ານີ້ຈະຊ່ວຍປະກອບຄຳເຫັນເພື່ອເປັນແນວທາງໃຫ້ຄະນະບໍລິຫານງານວິທະຍາໄລຄູກຳນົດວິໄສທັດ ແລະ ພາລະກິດໃຫ້ສອດຄ່ອງກັບລັກສະນະທ້ອງຖິ່ນໄດ້ຫຼາຍຂຶ້ນ.

b. ເຄື່ອງມືໃນການໃຊ້ເພື່ອບໍລິຫານ-ຄຸ້ມຄອງບາງອັນຍັງຂາດ ຊຶ່ງອາດມີຜົນສະທ້ອນຕໍ່ເປົ້າໝາຍ ແລະ ວິໄສທັດທີ່ວາງໄວ້.
c. ບາງຫ້ອງການຍັງບໍ່ໄດ້ຮັບບົດລາຍງານການເງິນລາຍຮັບ-ລາຍຈ່າຍວິຊາການ (ລາຍງານ ປະຈຳປີ)
d. ລະບົບການຈັດຊື້ຈັດຈ້າງຍັງບໍ່ທັນໄດ້ດີເທົ່າທີ່ຄວນ

3. ຂໍ້ສະເໜີແນາະເພື່ອປັບປຸງ
   a. ສ້າງຕັ້ງສະພາທີ່ປຶກສາໂດຍໃຫ້ປະກອບມີພາກສ່ວນກ່ຽວຂ້ອງທັງພາຍໃນ ແລະ ພາຍນອກໃຫ້ກວ້າງຂວາງ ແລະ ເລິກເຊິ່ງ;
   b. ສະເໜີເຮັດການລາຍງານການເງິນປີກກະຕິໃຫ້ພາກສ່ວນກ່ຽວຂ້ອງເພື່ອຮັບປະກັນຄວາມໂປ່ງໃສ ແລະ ຄວາມໂລ່ງໃຈໃນການໃຊ້ຈ່າຍງົບປະມານ ແລະ ແຫຼ່ງລາຍຮັບວິຊາການ.
   c. ສ້າງລະບຽບການຄຸ້ມຄອງບໍລິຫານທີ່ເຫັນວ່າຍັງບໍ່ທັນພຽງພໍເພື່ອຮອງຮັບວິໄສທັດດັ່ງກ່າວ

ມາດຕະຖານທີ III: ການພັດທະນາບຸກຄະລາກອນ

1. ຜົນການວິເຄາະຈຸດດີ
   a. ການບັນຈຸສັບຊ້ອນຄູອາຈານພະນັກງານໄປຕາມວິຊາສະເພາະທີ່ຈົບມາ
   b. ມີແຜນກໍ່ສ້າງບຸກຄະລາກອນຈະແຈ້ງ
   c. ຄູອາຈານທີ່ຈົບ ປ.ໂທ 52 ຄົນ ກວມປະມານ 25% ຂອງຄູທັງໝົດ (ກຳລັງສຶກສາຕໍ່ 31 ຄົນ)
2. ຜົນການວິເຄາະຂໍ້ຄົງຄ້າງ
   a. ຜົນການປະເມີນຄູອາຈານ (2016-17) ຊີ້ໃຫ້ເຫັນວ່າການນຳໃຊ້ສື່ໃນການຮຽນການສອນຂອງຄູອາຈານໄດ້ຄະແນນຕ່ຳກວ່າໝວດອື່ນ.
   b. ຂາດຄູສາຍພາລະສຶກສາ, ສິລະປະສຶກສາ, ຄູ ICT ທີ່ມີວຸດທິຈົບປະລິນຍາຕີ.
   c. ຄູອາຈານທີ່ມີວຸດທິຊັ້ນສູງ (31) ແລະ ປ.ຕີ (119) ມີ 150 ຄົນ ກວມ 75% ນັ້ນສະແດງໃຫ້ເຫັນວ່າຈຳນວນຄູອາຈານທີ່ມີວຸດປະລິນຍາຕີສອນໃນຫຼັກສູດປະລິນຍາຕີຍັງມີສັດສ່ວນຂ້ອນຂ້າງສູງ.
3. ຂໍ້ສະເໜີແນາະເພື່ອປັບປຸງ
   a. ຊຸກຍູ້ໃຫ້ແຜນພັດທະນາບຸກຄະລາກອນໃຫ້ໄດ້ຮັບຜົນ ແລະ ບັນລຸໄດ້ຕາມແຜນການທີ່ວາງໄວ້.
   b. ໃຫ້ມີແຜນການລະອຽດເພື່ອສ້າງໂອກາດໃຫ້ຄູ-ອາຈານໃນການທຽບຕຳແໜ່ງວິຊາການ - ຊຸກຍູ້ໃຫ້ຄູມີການຂຽນ-ຄົ້ນຄວ້າວິໄຈ - ແຟ້ມສະສົມຜົນງານ
   c. ບັນຈຸຄູທີ່ຂາດແຄນຄື: ຄູພາລະສຶກສາ, ຄູ ICT, ຄູສິລະປະສຶກສາ ແລະ ອື່ນໆ

ມາດຕະຖານທີ IV: ຫຼັກສູດ

1. ຜົນການວິເຄາະຈຸດດີ
   a. ໄດ້ປະກອບບຸກຄະລາກອນຮ່ວມກັບກົມສ້າງຄູ ແລະ ວິທະຍາໄລຄູອື່ນໃນການພັດທະນາຫຼັກສູດເພື່ອໃຊ້ເອກະພາບທົ່ວປະເທດ

2. ຜົນການວິເຄາະຂໍ້ຄົງຄ້າງ
    a. ຫຼັກສູດທີ່ປະຕິບັດຜ່ານມາບໍ່ໄດ້ມີການປະເມີນຄືນ-ການທົບທວນຄືນ.
    b. ຫຼັກສູດທີ່ເຮັດຮ່ວມກັບກົມສ້າງຄູ ເຫັນວ່າບາງເນື້ອໃນບໍ່ສອດຄ່ອງກັບລັກສະນະທ້ອງຖິ່ນ, ສັດສ່ວນບໍ່ເໝາະສົມ, ເນື້ອໃນທີ່ໃຊ້ປະກອບຫາຍາກ, ແລະ ອື່ນໆ.
3. ຂໍ້ສະເໜີແນາະເພື່ອປັບປຸງ
    a. ໃຫ້ເຮັດການປະເມີນຫຼັກສູດຄືນເປັນແຕ່ລະໄລຍະ ເພື່ອເປັນຂໍ້ມູນພື້ນຖານໃນການປັບປຸງ ແລະ ພັດທະນາຫຼັກສູດ. ໂດຍໃຫ້ມີຫຼາຍພາກສ່ວນເຂົ້າຮ່ວມໃນຂະບວນການການປະເມີນ.
    b. ເຊື່ອມສານທັກສະທີ່ສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ເຊັ່ນ: ການຮຽນຮູ້ດ້ວຍຕົນເອງ, ທັກສະຊີວິດ, ພາສາອັງກິດໃຫ້ຫຼາຍຂຶ້ນ
    c. ວຄສ ຄວນມີຄວາມເປັນເອກະລາດໃນລະດັບທີ່ເໝາະສົມໃນການສ້າງຫຼັກສູດທີ່ເປັນຄວາມຕ້ອງການຂອງສັງຄົມ (ພາສາອັງກິດ, ພາສາຫວຽດນາມ...) ອິງຕາມຈຸດພິເສດທາງທີ່ຕັ້ງຂອງວິທະຍາໄລ.

ມາດຕະຖານທີ V: ປະສິດທິຜົນຂອງການຮຽນ-ການສອນ

1. ຜົນການວິເຄາະຈຸດດີ
    a. ວິທະຍາໄລມີກົນໄກຕິດຕາມການຮຽນ-ການສອນຂອງຄູ ແລະການຮຽນຂອງນັກສຶກສາ.
    b. ໄດ້ນຳໃຊ້ເຕັກໂນໂລຊີແລະສື່ຕ່າງໆເຂົ້າໃນການສອນໂດຍຖືນັກສຶກສາເປັນໃຈກາງ.
    c. ສະຖານທີລົງເຝິກຫັດຂອງນັກສຶກສາແມ່ນພຽງພໍກັບຄວາມຕ້ອງການ.
2. ຜົນການວິເຄາະຂໍ້ຄົງຄ້າງ
    a. ການຟັງຄຳຄິດເຫັນກ່ຽວກັບປະສິດທິພາບການຮຽນ-ການສອນຈາກພາກສ່ວນຕ່າງໆຍັງບໍ່ຫຼາກຫຼາຍ ແລະ ບໍ່ທັນເປັນຮູບປະທຳໃນການປະຕິບັດ
    b. ການສອນບາງວິຊາຍັງມີເນື້ອໃນບໍ່ຄົບຖ້ວນ ຫຼື ບໍ່ທັນມີເນື້ອໃນທີ່ຈະສອນ.
    c. ວັດຖຸອຸປະກອນຮັບໃຊ້ການຮຽນ-ການສອນຍັງບໍ່ພຽງພໍກັບຄວາມຕ້ອງການຕົວຈິງ(ໂດຍພື້ນຖານແມ່ນມີ).
3. ຂໍ້ສະເໜີແນາະເພື່ອປັບປຸງ
    a. ຄວນເປີດໂອກາດໃຫ້ພາກສ່ວນຕ່າງໆມີສ່ວນຮ່ວມໃນການປະກອບຄຳຄິດຄຳເຫັນຕໍ່ປະສິດຕິຜົນຂອງການຮຽນ-ການສອນຂອງຄູ.
    b. ຄວນຊອກຫາວິທີແກ້ຢ່າງຮີບດ່ວນກ່ຽວກັບເອກະສານປະກອບການສອນຕໍ່ວິຊາທີ່ຍັງບໍ່ທັນມີ.

ມາດຕະຖານທີ VI: ການສົ່ງເສີມນັກສຶກສາ

1. ຜົນການວິເຄາະຈຸດດີ
    a. ວິທະຍາໄລມີລະບຽບຫຼັກການ, ມາດຕະຖານຈະແຈ້ງໃນການຮັບເອົານັກຮຽນເຂົ້າຮຽນຕາມມາດຖານຂອງກົມສ້າງຄູ.
    b. ໄດ້ມີກົນໄກໃຫ້ຄຳປຶກສາທາງດ້ານວິຊາການ ແລະດ້ານອື່ນໆແກ່ນັກຮຽນ-ນັກສຶກສາ.
    c. ການຈັດຕັ້ງຂອງນັກສຶກສາມີຫຼາຍລັກສະນະເຊັ່ນ: ຄະນະລຸ້ນ, ຄະນະຫ້ອງ, ຄະນະຫໍພັກ ແລະ ມີຊົມລົມຕ່າງໆ.

d. ໄດ້ມີການເຄື່ອນໄຫວຂະບວນການນອກຫຼັກສູດດີພໍສົມຄວນ
e. ອົງການຈັດຕັ້ງມະຫາຊົນກໍໄດ້ເຄື່ອນໄຫວຕາມພາລະບົດບາດຂອງຕົນດີສົມຄວນ.

2. ຜົນການວິເຄາະຂໍ້ຄົງຄ້າງ
    a. ການຮ່ວມມືກັບອາດີດນັກສຶກສາຍັງບໍ່ທັນເປັນຮູບເປັນຮ່າງ.
    b. ການຮ່ວມມືກັບເຄືອຂ່າຍຕ່າງໆເພື່ອຊ່ວຍນັກສຶກສາຈົບໄປຍັງບໍ່ທັນໄດ້ມີແຜນດຳເນີນການຊັດເຈນ.

3. ຂໍ້ສະເໜີແນາະເພື່ອປັບປຸງ
    a. ຄວນມີການຮ່ວມມືກັບອາດີດນັກສຶກສາໃນຮູບແບບຕ່າງໆ ແລະ ຈັດຕັ້ງປະຕິບັດໃຫ້ເປັນປົກກະຕິ.
    b. ຄວນເອົາໃສ່ໃນການຮ່ວມມືກັບເຄືອຂ່າຍຜູ້ກອບປະການເພື່ອຊ່ວຍນັກສຶກສາໃນຕໍ່ໜ້າ.
    c. ຄວນຊຸກຍູ້ໃຫ້ອົງການຈັດຕັ້ງມະຫາຊົນໄດ້ການເຄື່ອນໄຫວພາລະບົດບາດຂອງຕົນຢ່າງເຕັມສ່ວນ.

ມາດຕະຖານທີ VII: ສະພາບແວດລ້ອມ ແລະ ແຫຼ່ງການຮຽນຮູ້

1. ຜົນການວິເຄາະຈຸດດີ
    a. ວິທະຍາໄລມີເນື້ອທີ່ກວ້າງຂວາງ ແລະ ສະພາບແວດລ້ອມເອື້ອອຳນວຍສຳລັບການຈັດການຮຽນ-ການສອນຕາມ 5 ຫຼັກມູນການສຶກສາ.
    b. ສິ່ງອຳນວຍຄວາມສະດວກທີ່ຈຳເປັນໂດຍພື້ນຖານແລ້ວເຫັນວ່າຕອບສະໜອງໄດ້.
    c. ມີລະບົບຮັກສາສຸຂາອະນາໄມ ແລະ ຄວາມປອດໄພແມ່ນດີພໍສົມຄວນ.
    d. ໄດ້ປັບປຸງພັດທະນາພື້ນຖານໂຄງລ່າງ, ສິ່ງອຳນວຍຄວາມສະດວກ ແລະແຫຼ່ງການຮຽນຮູ້ ເປັນກ້າວໆມາຕາມສະພາບຕົວຈິງທາງດ້ານງົບປະມານ.
    e. ວິທະຍາໄລມີແຜນສະເໜີຂັ້ນເທິງໃນການປັບປຸງພື້ນຖານໂຄງລ່າງ.

2. ຜົນການວິເຄາະຂໍ້ຄົງຄ້າງ
    a. ຍັງຂາດຫ້ອງປະຖົມພະຍາບານເບື້ອງຕົ້ນ.
    b. ລະບົບຮັກສາຄວາມປອດໄພຢູ່ຫຼາຍຕຶກຍັງບໍ່ທັນໄດ້ຕິດຕັ້ງອຸປະກອນປ້ອງກັນອັກຄີໄພ.
    c. ການດູແລເບິ່ງແຍງອາຄານສະຖານທີ່ຍັງເຮັດໄດ້ບໍ່ທັນທົ່ວເຖິງເທົ່າທີ່ຄວນ ມີບ່ອນເປື້ອນຕາມເຂດຫໍພັກ, ຫ້ອງນ້ຳບໍ່ສະອາດ, ຫຼັງຄາຮົ່ວ, ບາງບ່ອນຍັງຮົກເຮື້ອ ບໍ່ໄດ້ຖາກຖາງ.
    d. ອາຄານ, ຫ້ອງນ້ຳຂອງວິທະຍາໄລຊຸດໂຊມຕາມການເວລາ, ມີບາງອັນໃຊ້ບໍ່ໄດ້ເລີຍ.
    e. ເດີ່ນບາງບ່ອນມີສິ່ງຮົກເຮື້ອ ແລະ ບໍ່ສາມາດນຳໃຊ້ເປັນປະໂຫຍດຕາມ 5 ຫຼັກມູນ.

3. ຂໍ້ສະເໜີແນາະເພື່ອປັບປຸງ
    a. ປັບປຸງແລະຂະຫຍາຍເດີ່ນຫຼິ້ນກີລາໃຫ້ສາມາດປະຕິບັດ 5 ຫຼັກມູນການສຶກສາ.
    b. ຄວນຈັດໃຫ້ມີຫ້ອງປະຖົມພະຍາບານເບື້ອງຕົ້ນຕາມຈຸດໃດໜຶ່ງທີ່ເໝາະສົມ.
    c. ຄວນຕິດຕັ້ງອຸປະກອນປ້ອງກັນອັກຄີໄພໃຫ້ຫາຍຂຶ້ນ ແລະ ຝຶກຊ້ອມການມອດໄຟໃຫ້ພາກສ່ວນກ່ຽວຂ້ອງ.
    d. ຄວນປັບປຸງລະບົບການຮັກສາອານາໄມ, ສ້າງສະຕິໃຫ້ທຸກຄົນມີສ່ວນຮ່ວມໃນການຮັກສາອະນາໄມ ແລະ ສ້າງສະພາບແວດລ້ອມທີ່ຍືນຍົງ.

e. ຄວນມີການບຳລຸງຮັກສາ ແລະ ສ້ອມແປງອາຄານຕ່າງໆນັບທັງຫ້ອງນ້ຳ, ແລະບໍລິເວນເດີນຍ່າງທົ່ວເຖິງ.

ມາດຕະຖານທີ VIII: ລະບົບຂໍ້ມູນຂ່າວສານ

1. ຜົນການວິເຄາະຈຸດດີ
    a. ວິທະຍາໄລຄູສະຫວັນນະເຂດແມ່ນມີລະບົບການບໍລິຫານຈັດການກ່ຽວກັບເລື່ອງຂໍ້ມູນຂ່າວສານດີ ເຊິ່ງເຫັນໄດ້ຈາກຄວາມພະຍາຍາມ ແລະ ຄວາມຕັ້ງໃຈການການພັດທະນາວຽກງານບໍລິຫານຈັດການຕ່າງໆ ຂອງວິທະຍາໄລໂດຍຫັນເອົາວຽກງານ ICT ເຂົ້າມາມີບົດບາດ ແລະ ເປັນຕົວຊ່ວຍເຂົ້າໃນການບໍລິຫານຕ່າງໆ ຂອງວຽກງານ. ມີຄວາມວ່ອງໄວ, ທັນສະໄໝ, ທັນຍຸກ, ທັນເຫດການ ທັງນີ້ກໍ່ເພື່ອອຳນວຍຄວາມສະດວກໃຫ້ການບໍລິຫານຈັດການຂອງທຸກຂອດວຽກງານໃຫ້ມີຄວາມເປັນເອກະພາບກັນ ແລະ ຫຼຸດຜ່ອນການໃຊ້ຈ່າຍທີ່ບໍ່ຈຳເປັນ;
    b. ການເກັບຮັກສາຂໍ້ມູນຂອງວິທະຍາໄວໃຫ້ມີຄວາມປອດໄພ ສາມາດປ້ອງກັນການຕົກເຮ່ຍເສຍຫາຍ ແລະ ເຫດຜົນອື່ນໆ ທີ່ອາດຈະເກີດຂຶ້ນ.
2. ຜົນການວິເຄາະຂໍ້ຄົງຄ້າງ
    a. ເຖິງວ່າວິທະຍາໄລ ຈະມີລະບົບຖານຂໍ້ມູນທີ່ຄົບຖ້ວນໂດຍມີການນຳໃຊ້ລະບົບ ICT ເຂົ້າມາມີສ່ວນໃນການບໍລິຫານຈັດການວຽກງານດັ່ງກ່າວນີ້ກໍ່ຕາມແຕ່ບັນຫາທີ່ຄົງຄ້າງກໍ່ຄືຍັງຂາດການທົບທວນຄືນກ່ຽວກັບຜົນການນຳໃຊ້ ແລະ ຜົນໄດ້ຮັບທີ່ອອກມາ, ຂໍ້ດີ, ຂໍ້ບົກຜ່ອງຈາກການນຳໃຊ້ລະບົບ ICT ມີຫຍັງແດ່ ແລະ ສິ່ງທີ່ຄວນຈະປັບປຸງແກ້ໄຂ, ພັດທະນາໃນຕໍ່ໜ້າຄວນຈະເຮັດໃນສ່ວນໃດຂອງລະບົບຖານຂໍ້ມູນ;
    b. ການຕິດຕາມຜູ້ຮຽນຈົບຍັງປະຕິບັດບໍ່ໄດ້ດີເທົ່າທີ່ຄວນ.
3. ຂໍ້ສະເໜີແນາະເພື່ອປັບປຸງ
    a. ທົບທວນ ຫຼື ເຮັດການປະເມີນຜົນຈາກການນຳໃຊ້ລະບົບ ICT ຂອງວິທະຍາໄລໂດຍການມີສ່ວນຮ່ວມຂອງຫຼາຍພາກສ່ວນລວມທັງຄູ່ຮ່ວມພັດທະນາ ແລະ ສັງຄົມ;
    b. ຄວນມີຖານຂໍ້ມູນເພື່ອຕິດຕາມຜູ້ຮຽນຈົບ;
    c. ຄວນມີບົດລາຍງານກ່ຽວກັບຜົນການນຳໃຊ້ຂໍ້ມູນຕ່າງໆ ເຂົ້າໃນການບໍລິຫານຈັດການວຽກງານຕ່າງໆຂອງວິທະຍາໄລ.

ມາດຕະຖານທີ IX: ລະບົບການປະກັນຄຸນນະພາບພາຍໃນ

1. ຜົນການວິເຄາະຈຸດດີ
    a. ການຈັດຕັ້ງປະຕິບັດວຽກງານປະກັນຄຸນນະພາບການສຶກສາຂອງວິທະຍາໄລ ໄດ້ມີຂໍ້ຕົກລົງຂອງທ່ານຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບວຽກງານປະກັນຄຸນນະພາບຂອງວິທະຍາໄລລວມທັງການ ປະເມີນຕົນເອງ ແລະ ມີແຈ້ງການຈາກກົມສ້າງຄູວ່າດ້ວຍໃຫ້ວິທະຍາໄລຄູຈັດຕັ້ງການປະເມີນຄຸນນະພາບພາຍໃນ ແລະ ພາຍນອກ;
    b. ມີແຜນການໃນການສ້າງວິທະຍາໄລ ໃຫ້ກາຍເປັນສູນແຫ່ງຄວາມເປັນເລີດທາງດ້ານສາຂາວິຊາຄະນິດສາດ ແລະ ເຄມີສາດ;

c. ນອກນັ້ນຍັງໄດ້ປະກອບລາຍງານຕົນເອງກ່ຽວກັບວຽກງານປະກັນຄຸນນະພາບ ແລະ ບົດສະຫຼຸບກ່ຽວກັບການປະກັນຄຸນນະພາບຂອງວິທະຍາໄລໃນສົກຮຽນ 2009-2010, 2010-2011, 2013-2014, 2015-2016.

2. ຜົນການວິເຄາະຂໍ້ຄົງຄ້າງ
   a. ໃນການແຕ່ງຕັ້ງບຸກຄະລາກອນເພື່ອປະກອບເຂົ້າເປັນຄະນະຮັບຜິດຊອບວຽກງານປະກັນຄຸນນະພາບການສຶກສາຂອງວິທະຍາໄລເຫັນວ່າຍັງບໍ່ທັນຄົບອົງປະກອບຕາມທີ່ໄດ້ກຳນົດໄວ້;
   b. ຍັງຂາດແຜນດຳເນີນສະເພາະກ່ຽວກັບວຽກງານດັ່ງກ່າວ;
   c. ການອອກບົດລາຍງານການປະເມີນຕົນເອງເຫັນວ່າຍັງບໍ່ທັນໄດ້ເຮັດເປັນປົກກະຕິ ໂດຍສ່ວນຫຼາຍເຮັດພຽງແຕ່ບົດສະຫຼຸບຫຍໍ້ຂອງການຈັດຕັ້ງປະຕິບັດວຽກງານປະກັນຄຸນນະພາບ ແລະ ຍັງຂາດການນຳສະເໜີກ່ຽວກັບການນຳເອົາຜົນການປະເມີນຕົນເອງມາຈັດຕັ້ງປະຕິບັດ ຫຼື ປັບປຸງຄືນໃນສົກຮຽນຕໍ່ໄປ;
   d. ການໂຄສະນາເຜີຍແຜ່ວຽກງານປະກັນຄຸນນະພາບການສຶກສາແມ່ນຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ.

3. ຂໍ້ສະເໜີແນາະເພື່ອປັບປຸງ
   a. ປັບປຸງບຸກຄະລາກອນເຂົ້າໃນຄະນະຮັບຜິດຊອບວຽກງານປະກັນຄຸນນະພາບການສຶກສາຂອງວິທະຍາຄືນໃໝ່ເພື່ອໃຫ້ມີຄວາມສອດຄ່ອງ ແລະ ຖືກຕ້ອງຕາມລະບຽບທີ່ໄດ້ກຳນົດໄວ້;
   b. ສ້າງແຜນດຳເນີນງານສະເພາະວຽກງານດັ່ງກ່າວນີ້ຢ່າງລະອຽດຈະແจ້ງ;
   c. ເຮັດການໂຄສະນາເຜີຍແຜ່ວຽກງານປະກັນຄຸນນະພາບການສຶກສາໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຮັບຊາບ;
   d. ບົດລາຍງານການປະເມີນຕົນເອງຕ້ອງເຮັດເປັນປົກກະຕິ ແລະ ເຮັດຕາມແບບຟອມທີ່ໄດ້ກຳນົດໄວ້ໃນປຶ້ມຄູ່ມືປະກັນຄຸນນະພາບການສຶກສາຊັ້ນສູງ.

ມາດຕະຖານທີ X: ການຄົ້ນຄວ້າວິທະຍາສາດແລະການບໍລິການວິຊາການ

1. ຜົນການວິເຄາະຈຸດດີ
   a. ວິທະຍາໄລມີຜົນສຳເລັດໃນການເຮັດການຄົ້ນຄວ້າ-ວິໄຈ, ມີລັກສະນະເປີດກວ້າງ ແລະ ສົ່ງເສີມໃຫ້ພະນັກງານ, ຄູ-ອາຈານໃຫ້ມີສ່ວນຮ່ວມໃນວຽກງານດັ່ງກ່າວນີ້ຫຼາຍ;
   b. ໃນໄລຍະຜ່ານມາຄູ-ອາຈານໄດ້ມີການເຂົ້າຮ່ວມກອງປະຊຸມເຜີຍແຜ່ກ່ຽວກັບວຽກງານວິໄຈ ແລະ ການນຳສະເໜີຜົນງານວິໄຈທັງຢູ່ພາຍໃນ ແລະ ຕ່າງປະເທດ;
   c. ມີການຂຶ້ນແຜນງົບປະມານຮັບໃຊ້ວຽກງານການຄົ້ນຄວ້າ-ວິໄຈ ແລະ ບໍລິການທາງສັງຄົມໄວ້ຢ່າງຊັດເຈນ. ໃນປັດຈຸບັນນີ້ວິທະຍາໄລມີຜົນງານ ແລະ ຜົນສຳເລັດຈາກການຄົ້ນຄວ້າວິໄຈເປັນຈຳນວນຫຼາຍເຊິ່ງເປັນເງື່ອນໄຂສະດວກໃນການຕໍ່ຍອດໃຫ້ຫຼາຍພາກສ່ວນໃນການພັດທະນາວຽກງານດັ່ງກ່າວໄດ້ດີໃນຕໍ່ໜ້າ.

2. ຜົນການວິເຄາະຂໍ້ຄົງຄ້າງ
    a. ການຄົ້ນຄວ້າທາງວິຊາການຍັງບໍ່ທັນມີຄວາມຫຼາຍ ເປັນຕົ້ນແມ່ນສາຍທຳມະຊາດຍັງບໍ່ທັນພົບເຫັນຜົນການຄົ້ນຄວ້າທາງວິຊາການ;
    b. ຍັງຂາດແຜນການສຳລັບການຄົ້ນຄວ້າວິໄຈ-ບໍລິການສັງຄົມ ແລະ ບົດສະຫຼຸບລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານດັ່ງກ່າວນີ້.
    c. ບໍ່ມີສະພາວິທະຍາສາດຂອງວິທະຍາໄລ ເພື່ອທົບທວນ ແລະ ຮັບຮອງບົດວິໄຈ.
3. ຂໍ້ສະເໜີແນາະເພື່ອປັບປຸງ
    a. ສ້າງແຜນດຳເນີນງານ ແລະ ແຜນການຍ່າງຊັດເຈນກ່ຽວກັບວຽກງານຄົ້ນຄວ້າ-ວິໄຈ ແລະ ບໍລິການສັງຄົມ;
    b. ພາຍຫຼັງສຳເລັດວຽກງານແລ້ວຄວນເຮັດບົດສະຫຼຸບລາຍງານກ່ຽວກັບວຽກດັ່ງກ່າວນີ້ ແລະ ການຄົ້ນຄວ້າທາງວິຊາການຄວນມີການກະຕຸກຊຸກຍູ້ໃຫ້ມີການຈັດຕັ້ງປະຕິບັດເປັນແຕ່ລະສົກຮຽນ ແລະ ມີການຍ້ອງຍໍຜົນງານຜູ້ທີ່ສາມາດສ້າງຜົນງານ ແລະ ສ້າງຊື່ສຽງໃຫ້ກັບວິທະຍາໄລ.
    c. ຄວນສ້າງຕັ້ງສະພາວິທະຍາສາດຂອງວິທະຍາໄລ.

IV. ສັງລວມບັນດາຂໍ້ສະເໜີ ແລະ ຂໍ້ສັງເກດຂອງຄະນະປະເມີນພາຍນອກ

4.1 ວິທະຍາໄລຄວນເພີ່ມທະວີການເຜີຍແຜ່ວິໄສທັດ ແລະ ພາລະກິດຂອງຕົນໃຫ້ແກ່ຄູອາຈານ ແລະ ນັກສຶກສາໄດ້ເຂົ້າໃຈ ແລະ ຜັນຂະຫຍາຍເຂົ້າສູ່ລວງເລິກໃນໜ້າທີ່ຄວາມຮັບຜິດຊອບຂອງແຕ່ລະບຸກຄົນ ຖືເອົາວຽກງານຄຸນນະພາບການສຶກສາຕິດພັນກັບວຽກງານຊີ້ນຳນຳພາ, ການຈັດຂະບວນການການຮຽນ-ການສອນ ໃນແຕ່ລະຂັ້ນ.

4.2 ຄວນສຶກສາໃນຮູບແບບ ແລະ ຄວາມເປັນໄປໄດ້ໃນການສ້າງສະພາທີ່ປຶກສາຂອງວິທະຍາໄລ ເພື່ອເປັນກົນໄກໃນການຮັບຟັງຄຳຄິດເຫັນ ແລະ ກຳນົດທິດທາງການພັດທະນາວິທະຍາໄລໃຫ້ແທດເໝາະກັບແຕ່ລະໄລຍະ.

4.3 ໃນສ່ວນຂອງການນຳໃຊ້ຫຼັກສູດທີ່ຖືກພັດທະນາຮ່ວມກັນລະຫວ່າງບັນດາວິທະຍາໄລຄູ, ກົມສ້າງຄູ, ຄະນະສຶກສາສາດນັ້ນ ໃນເວລານຳໃຊ້ຕົວຈິງວິທະຍາໄລຄວນມີຄວາມເປັນເອກະລາດໃນລະດັບທີ່ເໝາະສົມເພື່ອປັບປຸງບາງເນື້ອໃນຫົວຂໍ້ໃຫ້ມີຄວາມສອດຄ່ອງກັບລັກສະນະທ້ອງຖິ່ນຂອງຕົນໃຫ້ຫຼາຍຂຶ້ນ. ວິທະຍາໄລເອງ ຫຼື ກົມສ້າງຄູຄວນຝຶກອົບຮົມການຊອກຄົ້ນຂໍ້ມູນນຳອິນເຕີເນັດໃຫ້ຄູລາຍວິຊາ ຫຼື ບໍ່ດັ່ງນັ້ນກໍຕອບສະໜອງເອກະສານອ້າງອິງໃນການຈັດການຮຽນ-ການສອນທີ່ພຽງພໍເຂົ້າໃນຫ້ອງສະໝຸດ ຫຼື ລະບົບຖານຂໍ້ມູນອີເລັກໂຕຣນິກ. ເພາະຫຼັກສູດມີພຽງແຕ່ໂຄງຮ່າງ ຄວາມສາມາດ ແລະ ທັກສະຂອງຄູອາຈານຫຼາຍຄົນບໍ່ສາມາດຊອກຫາເນື້ອໃນປະກອບໄດ້;

4.4 ຫຼັກສູດທີ່ປະຕິບັດສຳເລັດແລ້ວ, ໃກ້ຈະສຳເລັດແລ້ວ, ຫຼື ກຳລັງປະຕິບັດຢູ່ ຄວນມີການທົບທວນຄືນ ແລະ ປະເມີນຍ່າງເປັນລະບົບໃນຮູບແບບໃດໜຶ່ງ ເພື່ອນຳໃຊ້ຜົນການປະເມີນເຫຼົ່ານັ້ນເປັນຂໍ້ມູນພື້ນຖານໃນການປັບຫຼັກສູດຄັ້ງຕໍ່ໄປ ຫຼື ເປັນຂໍ້ມູນອ້າງອິງໃຫ້ພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະກົມສ້າງຄູ;

4.5 ວິທະຍາໄລຄວນສົ່ງເສີມໃຫ້ນັກສຶກສານຳໃຊ້ຜົນຂອງການຄົ້ນຄວ້າຜ່ານມາ ແລະ ຜົນຂອງການຄົ້ນຄວ້າປັດຈຸບັນ ເພື່ອຕໍ່ຍອດໃນການຄົ້ນຄວ້າ ແລະ ຜະລິດເປັນຜະລິດຕະພັນໃນຮູບແບບການຕະຫຼາດເພື່ອສັງຄົມຕໍ່ໄປໃຫ້ຫຼາຍຂຶ້ນ.

4.6 ການປະສານງານ ແລະ ການສື່ສານລະຫວ່າງພາກສ່ວນທີ່ກ່ຽວຂ້ອງຄວນໃຫ້ກົມກຽວກັນລະຫວ່າງກົມວິຊາການ (ກົມສ້າງຄູ, ກົມມັດທະຍົມ, ແລະ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ) ດ້ວຍກັນເອງກັບທ້ອງຖິ່ນ ໂດຍສະເພາະກ່ຽວກັບການນຳສະເໜີຮູບແບບການແຕ່ງບົດສອນ ແລະ ການສອນແບບ UbD (Understanding by Design) ນັກຮຽນຄູຈາກວິທະຍາໄລຄູພົບບັນຫາໃນຮູບແບບວິທີການແຕ່ງ ແລະ ການສອນຮູບແບບດັ່ງກ່າວໃນເວລາລົງຝຶກງານເພາະຄູອາຈານ ສ່ວນໃຫຍ່ກໍ່ບໍ່ໄດ້ເຄີຍຝຶກຮູບແບບນີ້ມາກ່ອນ (ຄູທຳມະຊາດຈຳນວນໜຶ່ງໄດ້ຝຶກ) ມີແຕ່ກົມມັດທະຍົມຝຶກໃຫ້ຄູສາມັນປະຈຳການ.

4.7 ເຖິງແມ່ນວ່າການສອນນັກຮຽນຄູທີ່ໄດ້ທຶນຈາກແຜນງານການປັບປຸງຄຸນນະພາບ ແລະ ການຂະຫຍາຍໂອກາດການເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານ ຢູ່ໃນ ສປປ ລາວ - ຫຼື ແຜນງານບີຄວາ (BEQUAL) ນັ້ນພົບຄວາມຫຍຸ້ງຍາກເນື່ອງຈາກວ່າລະດັບຂອງເຂົາເຈົ້າບໍ່ສູງ ແລະ ບັນຫາການສື່ສານພາສາກາງກໍ່ຕາມ ສະເໜີໃຫ້ວິທະຍາໄລຄວນມີວິທີການສະເພາະໃນການຈັດການຮຽນ-ການສອນກຸ່ມດັ່ງກ່າວ ແລະ ຄວນມີກອງປະຊຸມປຶກສາຫາລື ແລະ ຖອດຖອນບົດຮຽນກັບພາກສ່ວນຮັບຜິດຊອບໂຄງການດັ່ງກ່າວກ່ຽວກັບວິທີການແຂ້ໄຂບັນຫາໃນແຕ່ລະຮູບແບບເປັນປົກກະຕິ.

4.8 ຄູສອນອະນຸບານຄວນມີທັກສະຫຼາຍດ້ານເພີ່ມອີກເຊັ່ນ: ການນຳພານັກຮຽນຈັດການຮຽນໃຫ້ສອດຄ່ອງກັບຈິດຕະສາດການຮຽນຮູ້ຂອງເດັກ, ການຫຼິ້ນ, ສິລະປະ-ດົນຕີ, ການແຕ່ງສື່ການສອນສຳລັບເດັກເປັນຕົ້ນ.

4.9 ວິທະຍາໄລຄວນສົ່ງເສີມໃຫ້ຄູອາຈານສ້າງ ແລະ ນຳໃຊ້ສື່ການຮຽນ-ການສອນ ເຂົ້າໃນການສອນຕົວຈິງໃຫ້ຫຼາຍ ດັ່ງເຊັ່ນ ວິຊາພູມສາດ (ຮູບທີ 2). ສື່ດັ່ງກ່າວຄວນປະສົມປະສານລະຫວ່າງສື່ປະເພດສິ່ງພິມ-ແຕ້ມ-ຜົນງານສ້າງສັນ, ສື່ປະເພດອີເລັກໂທຣນິກ ແລະ ໂປຣແກຣມຈຳລອງຕ່າງໆ.

4.10 ນອກຈາກວິຊາສະເພາະທີ່ສອນປົກກະຕິແລ້ວ ຄວນສອດແຊກເນື້ອໃນ ແລະ ທັກສະກ່ຽວກັບ: ການເຮັດວຽກເປັນທີມ, ການປັບຕົວເຂົ້າກັບສັງຄົມອ້ອມຂ້າງ, ການສື່ສານ, ການຄິດຢ່າງມີເຫດ-ມີຜົນ, ການຕັດສິນໃຈ, ການເປັນຜູ້ນຳ, ການຮຽນຮູ້ດ້ວຍຕົນເອງ ແລະ ພາສາອັງກິດເພີ່ມຂຶ້ນ ເພື່ອເປັນການຮັບປະກັນວ່າຄູເມື່ອຖືກບັນຈຸສັບຊ້ອນໃນສະຖານະການໃດໆກໍ່ຕາມເຂົາຈະສາມາດປັບຕົວເຂົ້າກັບແຕ່ລະສະພາບການໄດ້ເປັນຢ່າງດີ. ອີກຢ່າງໜຶ່ງຖ້າຫາກຄູປະຖົມໄດ້ພາສາອັງກິດດີສະຖານສຶກສາບໍ່ຈຳເປັນຕ້ອງບັນຈຸຄູພາສາອັງກິດສະເພາະໃນສະຖານສຶກສາຂອງຕົນ.

4.11 ການປະສານງານ-ແລກປ່ຽນຂໍ້ມູນກັບເຂດພື້ນທີ່ບໍລິການຄວນເຮັດປົກກະຕິໂດຍເຊື້ອເຊີນເຂົ້າຮ່ວມໃນບັ້ນເປີດ-ປິດສົກຮຽນ ຫຼື ນິທັດສະການວິທະຍາສາດຕ່າງໆທີ່ວິທະຍາໄລຈັດຂຶ້ນ ຫຼື ຜ່ານກົນໄກອາດີດນັກສຶກສາ ເປັນການຮັບຟັງ ແລະ ແລກປ່ຽນປະສົບການໃນການນຳພາ ແລະ ວຽກງານ

ວິຊາການ ເພື່ອເປັນການຮັບປະກັນໄດ້ວ່າການສ້າງບຸກຄະລາກອນມີຄວາມສອດຄ່ອງກັບການຊົມໃຊ້ໃນແຕ່ລະໄລຍະ.

4.12 ວິທະຍາໄລຄວນສຶກສາຄວາມເປັນໄປໄດ້ໃນການສ້າງຄູສາຍ ICT, ຄູພາລະສຶກສາ ແລະ ຄູສິລະປະ ເພາະເຫັນວ່າຄູໃນສາຂານີ້ໃນເຂດບໍລິການບໍ່ທັນພຽງພໍເທື່ອ ໂດຍສະເພາະແມ່ນ: ທົ່ວເມືອງໄກສອນ ພົມວິຫານ.

4.13 ເພີ່ມທະວີການຮ່ວມມືກັບສະຖາບັນການສຶກສາປະເທດເພື່ອນບ້ານໃນການກໍ່ສ້າງພະນັກງານ, ການເຮັດວິໄຈຮ່ວມກັນ, ນຳໃຊ້ແຫຼ່ງຂໍ້ມູນທາງວິຊາການຮ່ວມກັນ, ການເປັນ Peer Review, ເປັນຜູ້ຊົງຄຸນວຸດທິ ແລະ ສະພາບໍລິຫານວາລະສານວິຊາການຂອງວິທະຍາໄລ ແລະ ອື່ນໆ.

4.14 ຂໍ້ສະເໜີໃດໃນບົດປະເມີນນີ້ທີ່ເຫັນວ່າເປັນປະໂຫຍດ, ວິທະຍາໄລຄູຄວນນຳໄປພິຈາລະນາ ແລະ ມີມາດຕະການທີ່ເໝາະສົມໃນການນຳໃຊ້ ເພື່ອປັບປຸງຄຸນນະພາບສະຖານສຶກສາຂອງຕົນໃຫ້ມີປະສິດທິພາບ ແລະ ເປັນຮູບປະທຳ.

4.15 ໄລຍະເວລາຂອງການດຳເນີນການປະເມີນພາຍນອກແມ່ນສັ້ນ ພຽງແຕ່ 2 ວັນ, ເຮັດໃຫ້ຕ້ອງແກ່ຍາວການສຳພາດຂອງມື້ທີ 1 ຈົນຮອດ 5:30 ໂມງແລງ. ຊຶ່ງເຮັດໃຫ້ຜູ້ປະເມີນ ແລະ ຜູ້ສຳພາດເອງເກີດຄວາມເມື່ອຍລ້າ. ດັ່ງນັ້ນ, ຈຶ່ງສະເໜີໃຫ້ໃນການປະເມີນພາຍນອກຄັ້ງຕໍ່ໄປຄວນຂະຫຍາຍເວລາຂອງການປະເມີນຈາກ 2 ວັນ ເປັນ 3 ເຖິງ 4 ວັນ. ພ້ອມນີ້ກໍ່ໃຫ້ພາກສ່ວນກ່ຽວຂ້ອງຂຶ້ນແຜນງົບປະມານໃນການຂຽນບົດຕາມລະບຽບຂອງກະຊວງການເງິນ.

V. ເອກະສານຊ້ອນທ້າຍ

5.1 ຕາຕະລາງເຄື່ອນໄຫວການປະເມີນພາຍນອກ

ວາລະການດຳເນີນ ການປະເມີນພາຍນອກ

ທີ່ວິທະຍາໄລຄູສະຫວັນນະເຂດ, ຄັ້ງວັນທີ 21 – 22 ສິງຫາ 2017

ມື້ທີ1:

ເວລາ	ລາຍລະອຽດ	ຜູ້ຮັບຜິດຊອບ
08:00 – 08:30	ສະເໜີຈຸດປະສົງ ແລະ ແຜນດຳເນີນການປະເມີນ	ຄະນະປະເມີນພາຍນອກ
08:30 – 09:00	ການນຳສະເໜີສະພາບລວມ,ຄວາມເປັນມາ ແລະ ຈຸດພິເສດຂອງວິທະຍາໄລ	ຕາງໜ້າຂອງວິທະຍາໄລຄູ
09:00 – 09:45	ຢ້ຽມຊົມສະຖານຕ່າງໆທີ່ທົ່ວວິທະຍາໄລ	ຄະນະປະເມີນພາຍນອກ ຜູ້ຮັບຜິດຊອບຂອງວິທະຍາໄລ
09:45 – 10:00	ອາຫານຫວ່າງ	ວິທະຍາໄລຄູ
10:00 - 12:00	ທີມປະເມີນກວດເອກະສານຫຼັກຖານຕ່າງໆ	ຄະນະປະເມີນພາຍນອກ ຄະນະປະເມີນຕົນເອງຂອງວິທະຍາໄລ
12:00 – 13:00	ພັກທ່ຽງ	
13:00– 13:30	ສຳພາດຄະນະອຳນວຍການຂອງວິທະຍາໄລ	ຄະນະປະເມີນພາຍນອກ ຄະນະອຳນວຍການຂອງວິທະຍາໄລ ທຸກທ່ານ
13:30 – 14:00	ສຳພາດຫົວໜ້າ ແລະ ຮອງ ທັງ 10ຫ້ອງການ	ຄະນະປະເມີນພາຍນອກ ຫົວໜ້າ ແລະ ຮອງ ທັງ 10ຫ້ອງການ
14:00 –14:45	ສຳພາດນັກສຶກສາ ແລະ ອາດີດນັກສຶກສາ	ຄະນະປະເມີນພາຍນອກ ນັກສຶກສາ ແລະ ອາດີດນັກສຶກສາຈຳນວນໜຶ່ງ **(ຄັດເລືອກຈາກຕ່າງຊັ້ນ, ຕ່າງສາຍ)**
14:45 – 15:15	ອາຫານຫວ່າງ	ວິທະຍາໄລຄູ
15:15 – 16: 00	ສຳພາດຄຸສອນ	ຄະນະປະເມີນພາຍນອກ ຄຸສອນຂອງແຕ່ລະຫຼັກສູດ **(ຄັດເລືອກຈາກຕ່າງຊັ້ນ, ຕ່າງສາຍ ແລະ ເພດ)**
ມື້ທີ 2:		
08:00 – 09:00	ຄະນະປະເມີນກວດເອກະສານຫຼັກຖານຕ່າງໆເພີ່ມເຕີມ (ກໍລະນີຈຳເປັນ)	ຄະນະປະເມີນພາຍນອກ ຄະນະປະເມີນຕົນເອງຂອງວິທະຍາໄລ
09:00 - 10:00	ຄະນະປະເມີນຂຽນບົດລາຍງານການປະເມີນພາຍນອກ ເພື່ອລາຍງານໃຫ້ວິທະຍາໄລໄດ້ຮັບຊາບຜົນການປະເມີນ ເບື້ອງຕົ້ນ	ຄະນະປະເມີນພາຍນອກ
10:00 - 10:15	ອາຫານຫວ່າງ	ວິທະຍາໄລຄູ
10:15- 12:00	ຄະນະປະເມີນສືບຕໍ່ຂຽນບົດລາຍງານການປະເມີນພາຍນອກ	ຄະນະປະເມີນພາຍນອກ
12:00 – 13:00	ພັກທ່ຽງ	
13:00 – 14:30	ລາຍງານໃຫ້ວິທະຍາໄລໄດ້ຮັບຊາບຜົນການປະເມີນ ເບື້ອງຕົ້ນ	ຜູ້ປະເມີນພາຍນອກ ວິທະຍາໄລຄູ

5.2 ລາຍຊື່ ແລະ ພາກສ່ວນທີ່ຖືກສຳພາດ

ໃບລົງທະບຽນສຳລັບການປະເມີນພາຍນອກ ທີ່ວິທະຍາໄລຄູ ສະຫວັນນະເຂດ ວັນທີ 21-22 ສິງຫາ 2017
ຄະນະອຳນວຍການ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ເບີໂທ	ລາຍເຊັນ
1	ທ.ລັດສະໝີ ພະໄຊສີ	ຫອ	22609977	[signature]
2	ທ.ທວງເຄນ ຄຳຖາຄຸ	ຮອງ ພ/ຂ	55644455	[signature]
3	ມ.ໃສຫຼັນຊົ້ນ ໂພຫີສານ	ຮອງ	22723789	[signature]
4	ທ. ພນີ ມະລອນ ວໍລະຍຸດ	ຮອງ ພອ	22311875	[signature]
5				

ໃບລົງທະບຽນສຳລັບການປະເມີນພາຍນອກ ທີ່ວິທະຍາໄລຄຸ ສະຫວັນນະເຂດ ວັນທີ 21-22 ສິງຫາ 2017
ຄຸສອນໂຮງຮຽນສາມັນ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ຊັ້ນຮຽນ/ວິຊາສອນ	ເບີໂທ	ລາຍເຊັນ
1	ນ. ບຸຕຕີ ຄະວີ ສົນ	ຫ. ວິພົນໄລ້	ສິກສາ ພັລພໍຊຸນ4	56329988	
2	ນ. ພຸຜົ ຊັ້ຄາ	ຫ. ອ.	ຮ/ຮອ.ບ ຫາງບົ່ງ	98426878	
3	ນ. ເຫັດສະຫວອນ ສີ່ວິໄລ	ຫ. ວ	ຮ/ລປ/ຫ ສຸ.ນ້ອຍຫ	0305300302	
4					
5					
6					
7					
8					
9					
10					

ใบลงทะບຽນສຳລັບການປະເມີນຜາຍນອກ ທີ່ວິທະຍາໄລຄູ ສະຫວັນນະເຂດ ວັນທີ 21-22 ສິງຫາ 2017
ຫົວໜ້າຫ້ອງການ/ຮອງ 10 ຫ້ອງການ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ຫ້ອງການ	ເບີໂທ	ລາຍເຊັນ
1	ທ້າວ ຄຳປະສົງ ຄຸນມົນໄຊ	ຮອງຫົວໜ້າຫ້ອງການ	ພາສາຕ່າງປະເທດ	020 52348483	
2	ທ. ທອງຄຳ ເນີນທະວົງສາ	ທ. ຫົວໜ້າການ ອຊບ	ອະນຸບານ - ປະຖົມ	22604412	
3	ທ. ບົວລົນ ດາລາທາວົງ	ທ. ຫົວໜ້າການວິທະຍາສາດ	ວິທະຍາສາດ	55062959	
4	ທ. ບຸນເລີດ ສົມດີບຸນພາບ	ສອງ ຫົວໜ້າການ ວ/ກ	ວິທະຍາສາດທຳມະຊາດ	55643913	
5	ທ. ສີຫານຸພາດ ທຳມະວົງ ສີ	ຮອງຫົວໜ້າການ ວຊກ	ສິ່ງເສີມວິຊາການ	22605723	
6	ທ້າວ ອິນທະພັດ ອິນສະລິດ	ຮອງຫົວໜ້າ ສະໜາມ ສຶກສາ	ກິດຈະກຳນອກສົກຮຽນ	52911298	
7	ທ. ສະນິດ ນາ ສີ ສີ ນາ	ຫົວໜ້າ ວິທະ ສາ ສາ ຫນ	ຫົວໜ້າ ການ ສຶກ ສາ ທ ນ ນ ຊ ນ	99504555	
8	ນ. ແກ້ວລ້ຳ ວ່ອນ ພົມມະ ສີ ສີ ຈິດ	ຫົວ ໜ້າ ການ ສຶ ກ ສາ	ຫົວ ໜ້ າ ການ ເລ ກ ຂ ນ ລ ຊ	59533242	
9	ນ. ສີ ນ ຈິ ດ ນ ະ ລ ວ ງ ດ າ ດ	ຮອງຫົວໜ້າການ ວິ ທ ະ ຍ າ ສ າ ສ ນ	ຫ ົ ວ ໜ ້ າ ການ ສ ຶ ກ ສ າ ສ ນ	22024406	
10	ນ. ສຸ ກ ສ ັ ນ ໄ ຊ ຍ ະ ເພ ັ ດ	ຫ ົ ວ ໜ ້ າ ພ ະ ແ ນ ກ ຫ ້ ອ ງ ສ ະ ສ ມ	ວ ິ ທ ະ ຍ າ ສ າ ສ ະ ນ ິ ດ ຄ ະ ນ ິ ດ	55960262	
11	ນ. ບຸ ນ ທ ະ ວ ັ ນ ຈ ະ ນ ະ ວ ົ ງ ສ າ	ຮ ອ ງ ຫ ົ ວ ໜ ້ າ ພ ະ ແ ນ ກ ສ ຸ ບ - ປ ຊ	ພ ະ ຫ ັ ດ ທ ະ ນ ຸ ບ - ປ ຊ	56557152	
12	ທ. ສຸ ກ ສ າ ລ ອ ນ ຄ ຳ ສ ີ ລ ິ ທ ິ ດ ໄ ຊ ຍ ະ	ຮ ອ ງ ຫ ົ ວ ໜ ້ າ ການ ວ ິ ທ ະ - ປ ະ ຕ ິ ບ ັ ດ ຈ ິ ດ - ບ ໍ ່ ເ ປ ັ ນ		98660289	
13	ທ. ຄ່ຳ ທ ອ ງ ສ ະ ລ າ ດ	ຮ ອ ງ ຫ ົ ວ ໜ ້ າ ພ ະ ແ ນ ກ ບ ລ ິ ຫ ານ	ບ ລ ິ ຫ ານ	22603996	
14	ທ. ບ ົ ວ ລ ະ ສ ອ ດ ລ າ ດ ສ ະ ນ ິ ດ	ຮ ອ ງ ຫ ົ ວ ໜ ້ າ ຫ້ ອ ງ ການ	ຈ ດ	91345355	
15	ທ. ທ ຳ ພ ອ ນ ຂ ະ ໂ ມ ດ ພ ະ ພ ັ ນ ທ	ບ ານ ການ ກ ິ ດ ແ ລ ະ ສ ິ ນ ຄ ້ າ	ສ ິ ນ ຄ ້ າ	22316593	
16	ທ ພ ັ ນ ທ າ ໄ ຊ ຣ ະ ວ ົ ງ	ພ ະ ແ ນ ກ ສ ຸ ກ ສ າ ປ ະ ສ ົ ມ	ສ ຸ ກ ສ າ ປ ະ ສ ົ ມ	02022347765	
17	ນ. ຈ ິ ດ ເ ຮ ັ ບ ປ ານ ຄ ຸ ດ	———ຫ ———ດ	———ດ	020 58889632	
18					

ใบลงทะບຽນສຳລັບການປະເມີນຜາຍນອກ ທີ່ວິທະຍາໄລຄູ ສະຫວັນນະເຂດ ວັນທີ 21-22 ສິງຫາ 2017
ນັກສຶກສາ

ລ/ດ	ຊື່ ແລະ ນາມສະກຸນ	ອາທິດນັກສຶກສາ/ປີກຈຸບັນ	ປີຮຽນ	ສາຍຮຽນ	ວິຊາຮຽນ	ລະບົບ	ເບີໂທ	ລາຍເຊັນ
1	ນ. ພ ອ ນ ທ ອ ງ ສ ຸ ນ ະ ນ ຸ ນ ໄ ຊ	ອ າ ທ ິ ດ ນ ັ ກ ສ ຶ ກ ສ າ	ປ.12	ສ ິ ນ ຄ ້ າ	ພ າ ລ	ປ ະ ຈ ຳ	29946447	
2	ທ ສ ິ ນ ສ ຸ ລ ິ ນ ທ ະ ນ ຸ ພ ະ	ອ າ ທ ິ ດ ນ ັ ກ ສ ຶ ກ ສ າ	ປ.11	ອ ະ ນ ຸ ບ ານ	ອ ະ ນ ຸ ບ ານ	ປ ະ ຈ ຳ ວ ັ ນ	22447333	
3	ທ. ສ ີ ໂ ມ ້ ນ ແ ສ ງ ໂ ທ ລ ະ ນ ີ ດ	ປ ັ ດ ຈ ຸ ບ ັ ນ	ປ.2	ພ າ ສ າ ຕ່ າ ງ ປ ະ ເ ທ ດ	ອ ັ ງ ກ ິ ດ	12+4	97624388	
4	ນ. ກ ອ ງ ຄ ຳ ໄ ຊ ຍ ະ ສ ານ	ປ ັ ດ ຈ ຸ ບ ັ ນ	3	ສ ິ ນ ຄ ້ າ	ພ າ ລ ະ ລ ະ ວ	12+4	76062152	
5	ນ. ຈ ຸ ພ າ ຈ ັ ນ ອ ິ ນ ທ ະ ວ ົ ງ ສ າ	ປ ັ ດ ຈ ຸ ບ ັ ນ	2	ທ າ ຊ	ເ ຄ ມ ີ ສ າ ດ	12+4	58549122	
6	ທ. ຄ ຳ ມ ະ ນ າ ສ ີ ຈ ຸ ລ ະ	ປ ັ ດ ຈ ຸ ບ ັ ນ	2	ກ ໍ ສ ະ ວ ະ ກ ຳ + 3	ປ ະ ວ ັ ດ ຫ ລ ິ ດ ນ ຳ	11+1+3	58510393	
7	ທ. ລ ຳ ແ ພ ງ ພ ັ ນ ສ ະ ຫ ວ ່ ອ ງ	ປ ັ ດ ຈ ຸ ບ ັ ນ	2	ພ າ ສ າ ຕ່ າ ງ ປ ະ ເ ທ ດ	ອ ັ ງ ກ ິ ດ	12+4		
8	ທ. ຈ ອ ນ ນ ິ ດ ທ ະ ນ ົ ນ ສ ີ ວ ິ ໄ ລ	ປ ັ ດ ຈ ຸ ບ ັ ນ	2	ທ ຳ ມ ະ ຊ າ ດ	ຄ ະ ນ ິ ດ ສ າ ດ	12+4	77929695	
9	ທ. ລ ິ ນ ໄ ປ ນ ພ ຸ ທ ສ ັ ນ ດ ິ ນ	ປ ັ ດ ຈ ຸ ບ ັ ນ	1	ອ ະ ນ ຸ ບ ານ ປ ະ ຖ ົ ມ	ປ ະ ຖ ົ ມ	12+4	020 96242444	
10	ທ ຄ ຳ ລ ວ ນ ສ ີ ຄ ຳ ວ ອ ນ ສ ວ ນ	— ດ —	3	ວ ິ ທ ະ ຍ າ ສ າ ສ ະ ນ ິ ດ	ປ ະ ຕ ິ ບ ັ ດ ສ າ ກ	12+4	02098837057	
11								
12								
13								
14								
15								
16								
17								
18								

ใบลงทะบຽນສຳລັບການປະເມີນຜາຍນອກ ທີ່ວິທະຍາໄລຄູ ສະຫວັນນະເຂດ ວັນທີ 21-22 ສິງຫາ 2017

ຄູສອນ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ປີຮຽນ	ສາຍທີ່ສອນ	ວິຊາສອນ	ລະບົບ	ເບີໂທ	ລາຍເຊັນ
1	ທຸກ. ແກ້ວສາຫວີ ໄຊຍະວົງ	ຫົວໜ້າ ຫວ່ຍງານ	ປີ3. ປີ4	ວິທະຍາສາດ ພ	ປະຫວັດສາດ	12+4	55743082	
2	ທຸກ. ສົມພະຈຸນາ ຫຼັ່ນແກ້ວ	ຄູສອນ	ປີ3, ປີ1	~~ວິທະຍາສາດ~~ ~~ປະຫວັດ~~	ພູມສາດ	9+3 ແລະ 12+4	97258760	
3	ທຸກ. ໂພສີແກ້ວ ສີບຸນເຮືອງ	ຄູສອນ	2,3,4	ພາສາຕ່າງປະເທດ	ພາສາອັງກິດ	12+4	06457555	
4	ນ. ສຸພາວະດີ ທານະວົງສາ	ຄູສອນ	2.	ພາສາຕ່າງປະເທດ	ພາສາອັງກິດ	12+4	91240793	
5	ນ. ແກ້ວອິງຄອນ ຈັນທະລັງສີ	ຄູສອນ	3, 4	~~ພາສາ~~ ~~ຄ~~ ~~ນ~~ ~~ນ~~ ~~ວ~~ ~~ວ~~ ~~ສ~~ ~~ສ~~ ~~ສ~~	ອັນນະຄາດ	12+4	030909160	
6	ນ. ຄຳຍຸ ສີນທະວົງ	ຫົວໜ້າ ຫ້ອງການ	1, 2, 3	ວະນຸຈານ-ປະກົດ	ຫ້ອງການ	9+3	77997187	
7	ນ. ພຸທອນ ດ່ານວະລິນ	ຮອງ ຫົວ ຫ້ອ ຫ້ອ ງ	2	ສາຍທ່ານະຈາດ	ວິເຄາະ ຄຸນສົມບັດ	12+4	22787138	
8	ນ. ເນ້ຍອີ່ທ ສັດທາວົງ	ຄູສອນ	2, 3, 4	ສາຍທ້ານະຈາດ	ເຄມີ-ສັດ	12+4	28894525	
9								
10								
11								
12								
13								
14								
15								
16								
17								
18								

5.3 ຮູບພາບປະກອບແຕ່ລະມາດຕະຖານ

ມາດຕະຖານທີ 1

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ
ກົມສ້າງຄູ
ວິທະຍາໄລຄູສະຫວັນນະເຂດ

797
ເລກທີ...../ວຄສ/2016
ວັນທີ.....17 NOV 2016.....

ຂໍ້ຕົກລົງຂອງຜູ້ອຳນວຍການ
ວ່າດ້ວຍການອະນຸມັດນຳໃຊ້ວິໄສທັດຮອດປີ 2020
ແລະ ແຜນຍຸດທະສາດ 5 ປີ (2016-2020) ຂອງວິທະຍາໄລຄູສະຫວັນນະເຂດ

ອີງຕາມ: ຂໍ້ຕົກລົງຂອງທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກີລາ ສະບັບເລກທີ 2870/ສສກ.ຈຕ ລົງວັນທີ 22 ກໍລະກົດ 2015 ວ່າດ້ວຍການແຕ່ງຕັ້ງພະນັກງານດຳລົງຕຳແໜ່ງບໍລິຫານວິທະຍາໄລຄູສະຫວັນນະເຂດ

ອີງຕາມ: ຂໍ້ຕົກລົງຂອງທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກີລາ ສະບັບເລກທີ 1195/ສສກ.ສຄ ລົງວັນທີ 9 ມີນາ 2016 ວ່າດ້ວຍການອະນຸມັດທົດລອງນຳໃຊ້ຄູ່ມືການສ້າງສູນແຫ່ງການພັດທະນາ ແລະ ສູນແຫ່ງຄວາມເປັນເລີດ ສຳລັບສາຍສ້າງຄູ

ອີງຕາມ: ແຈ້ງການຂອງທ່ານຫົວໜ້າກົມສ້າງຄູ, ກະຊວງສຶກສາທິການ ແລະ ກີລາ ສະບັບເລກທີ 699/ສຄ ລົງວັນທີ 29 ກັນຍາ 2016 ເລື່ອງການສ້າງສູນແຫ່ງການພັດທະນາຢູ່ໃນວິທະຍາໄລຄູ

ອີງຕາມ: ການຄົ້ນຄວ້າ ແລະ ເຫັນດີເປັນເອກະພາບຂອງຄະນະກຳມະການດຳເນີນງານສ້າງແຜນຍຸດທະສາດ ຂອງວິທະຍາໄລຄູສະຫວັນນະເຂດຄັ້ງວັນທີ 2 ພະຈິກ 2016

ຜູ້ອຳນວຍການວິທະຍາໄລຄູສະຫວັນນະເຂດ ຈຶ່ງຕົກລົງ:

ມາດຕາ 1: ອະນຸມັດນຳໃຊ້ ວິໄສທັດຮອດປີ 2020 ແລະ ແຜນຍຸດທະສາດ 5 ປີ (2016-2020) ຂອງ ວິທະຍາໄລຄູສະຫວັນນະເຂດ

ມາດຕາ 2: ມອບໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມວິໄສທັດ ແລະ ແຜນຍຸດທະສາດດັ່ງກ່າວ ໃຫ້ປະກົດຜົນເປັນຈິງຕາມຄາດໝາຍທີ່ວາງໄວ້

ມາດຕາ 3: ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ຜູ້ອຳນວຍການ

ກະຊວງສຶກສາທິການ ແລະ ກີລາ
ວິທະຍາໄລ ສະຫວັນນະເຂດ
ກົມສ້າງຄູ

ລັດສະໝີ ພະໄຊສີ

ບ່ອນສົ່ງ:

- ຄະນະອຳນວຍການ 4 ສະບັບ
- ຫ້ອງການ 10 ສະບັບ
- ເກັບມ້ຽນ 1 ສະບັບ

ຮູບທີ 01: ຂໍ້ຕົກລົງຜູ້ອຳນວຍການວ່າດ້ວຍການນຳໃຊ້ວິໄສທັດ 2020 ຂອງ ວຄສ

ມາດຕະຖານທີ 5

ຮູບທີ 02: ອາຈານສອນວິຊາພູມສາດນຳສະເໜີຜົນງານແຜນທີ່ທີ່ນັກສຶກສາສ້າງ

ມາດຕະຖານທີ 6

ຮູບທີ 03: ສູນຕັດຜົມ ວຄສ ໃຊ້ສອນນັກສຶກສາຜູ້ສົນໃຈກ່ອນລົງຝຶກງານ

ມາດຕະຖານທີ 7

ຮູບທີ 04: ລະບົບການສືບຄົ້ນ ແລະ ຢືມປຶ້ມຢູ່ຫ້ອງສະໝຸດ

ມາດຕະຖານທີ 8



ຮູບທີ 05: ໜ້າເວັບໄຊຂອງວິທະຍາໄລທີ່ສາມາດເຂົ້າເຖິງຂໍ້ມູນທີ່ຈຳເປັນພື້ນຖານໄດ້

ມາດຕະຖານທີ 9

ຮູບທີ 06: ແຟ້ມຈັດເກັບເອກະສານຫລັກຖານທີ່ກ່ຽວຂ້ອງກັບ 10 ມາດຕະຖານ ແຍກຕາມຕົວຊີ້ວັດ

ມາດຕະຖານທີ 10

ຮູບທີ 07: ປົກໜ້າ ແລະ ຫຼັງປົ້ມວາລະສານວິຊາການຂອງວິທະຍາໄລ